ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

16-23
ມິຖຸນາ
2026
ປີທີ 15
ສະບັບທີ 1070

## ປະທານສະພາແຫ່ງຊາດ ຢ້ຽມຢາມໂຮງງານກັ່ນຫຼອມວັດຖຸມີຄ່າ ລາວ-ສາກົນ ແລະ ທະນາຄານຄຳລາວ



(ສພຊ) - ວັນທີ 18 ມິຖຸນານີ້ທີ່ນະຄອນຫຼວງວຽງຈັນ, ທ່ານ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຢ້ຽມຢາມໂຮງງານກັ່ນຫຼອມວັດຖຸມີຄ່າ ລາວ-ສາກົນ ແລະ ທະນາຄານຄຳລາວ; ໂດຍມີທ່ານ ຈັນທອນ ສິດທິໄຊ ປະທານ ແລະ ຜູ້ກໍ່ຕັ້ງໂຮງງານກັ່ນຫຼອມວັດຖຸມີຄ່າ ລາວ-ສາກົນ ພ້ອມດ້ວຍຄະນະຜູ້ບໍລິຫານ ໃຫ້ການຕ້ອນຮັບ.

ອ່ານຕໍ່ໜ້າ 2



ແນວຄິດປະທານ
**ໄກສອນ ພົມວິຫານ**
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ການຕີລາຄາພະນັກງານ-ສະມາຊິກພັກນັ້ນ ກໍຕ້ອງຖືເອົາຄຸນສົມບັດ, ຄວາມສາມາດ ແລະ ຜົນງານຕົວຈິງໃນການປະຕິບັດໜ້າທີ່ການເມືອງຂອງເຂົາເຈົ້າເປັນໄມ້ຫຼາວັດແທກ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 361)

ອ່ານຕໍ່ສະບັບໜ້າ

## ທາບທາມຮ່າງກົດໝາຍກຳລັງປ້ອງກັນຄວາມສະຫງົບ



(ສພຊ) - ວັນທີ 15 ມິຖຸນາ 2026, ກະຊວງປ້ອງກັນຄວາມສະຫງົບ (ປກສ) ໄດ້ຈັດກອງປະຊຸມທາບທາມ ຮ່າງກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ (ສະບັບປັບປຸງ) ຢູ່ຂັ້ນສູງກາງ ໂດຍການເປັນປະທານ ຂອງທ່ານ ພົທ. ວັນທອງ ກອງມະນີ ຄະນະເລຂາທິການສູນກາງພັກ, ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ, ເຂົ້າຮ່ວມມີຮອງລັດຖະມົນຕີ, ຫົວໜ້າ-ຮອງຫົວໜ້າກົມໃຫຍ່, ຫ້ອງວ່າການ ພ້ອມດ້ວຍອະດີດການນຳອາວຸໂສ, ກົມກອງອ້ອມຂ້າງ ແລະ ຄະນະຮັບຜິດຊອບປັບປຸງກົດໝາຍ.

ໃນກອງປະຊຸມ, ພົຈວ. ອານຸເດດ ຄູນຄຳ ຫົວໜ້າຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບ ໄດ້ຜ່ານບົດສະເໜີກ່ຽວກັບການປັບປຸງຮ່າງກົດໝາຍດັ່ງກ່າວ ໂດຍຍົກໃຫ້ເຫັນຄວາມຈຳເປັນ ແລະ ເຫດຜົນໃນການປັບປຸງ ເຊິ່ງ ກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບ

ອ່ານຕໍ່ໜ້າ 2

## ຫາລືຜົນການຄົ້ນຄວ້ານະໂຍບາຍ-ກົນໄກຄຸ້ມຄອງການຂຸດຄົ້ນແຮ່ທີ່ນ ແລະ ຊາຍ




(ສພຊ) - ກອງປະຊຸມປຶກສາຫາລືຜົນການຄົ້ນຄວ້ານະໂຍບາຍ ແລະ ກົນໄກຄຸ້ມຄອງການຂຸດຄົ້ນແຮ່ຫີນ ແລະ ຊາຍແບບຍືນຍົງຕາມລຳແມ່ນ້ຳຂອງ ແລະ ນ້ຳສາຂາ ຢູ່ ສປປລາວ ຈັດຂຶ້ນໃນວັນທີ 23 ມິຖຸນານີ້ ທີ່ນະຄອນຫຼວງວຽງຈັນໂດຍການເປັນປະທານຂອງທ່ານ ກອງແກ້ວ ໄຊສິງຄາມ ຮອງປະທານສະພາແຫ່ງຊາດ, ມີທ່ານ ນາງ

ອ່ານຕໍ່ໜ້າ 5

## ພິທີມອບ-ຮັບໜ້າທີ່ລະຫວ່າງຫົວໜ້າກົມທີ່ຂຶ້ນກັບ ກສງ



(ສພຊ) - ວັນທີ 15 ມິຖຸນານີ້ ທີ່ສະພາແຫ່ງຊາດ, ໄດ້ມີພິທີມອບ-ຮັບໜ້າທີ່ລະຫວ່າງບັນດາຫົວໜ້າກົມຜູ້ເກົ່າ ແລະ ຜູ້ໃໝ່ ທີ່ຂຶ້ນກັບກຳມາທິການເສດຖະກິດ ແລະ ການເງິນ (ກສງ) ໂດຍການເປັນປະທານຂອງທ່ານ ວິໄລວົງ ບຸດດາຄຳ

ອ່ານຕໍ່ໜ້າ 5

## ປະກອບຄຳເຫັນໃສ່ຮ່າງກົດໝາຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ



(ສພຊ) - ກອງປະຊຸມທາບທາມປະກອບຄຳເຫັນໃສ່ຮ່າງກົດໝາຍວ່າດ້ວຍການຕ້ານ ແລະສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ (ສະບັບປັບປຸງ) ຂັ້ນທ້ອງຖິ່ນ ໄດ້ຈັດຂຶ້ນໃນວັນທີ 17 ມິຖຸນາ 2026 ທີ່ຫ້ອງປະຊຸມຫ້ອງວ່າການແຂວງສະຫວັນນະເຂດ ໂດຍການເປັນ

ອ່ານຕໍ່ໜ້າ 8

## ກວດກາເນື້ອໃນຮ່າງກົດໝາຍ 2 ສະບັບ

(ສພຊ) - ກອງປະຊຸມກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ປັບປຸງ) ແລະ ຮ່າງກົດໝາຍວ່າດ້ວຍຄັງເງິນແຫ່ງລັດ (ສ້າງໃໝ່) ໄດ້ຈັດຂຶ້ນໃນວັນທີ16-19ມິຖຸນາ2026 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ວິໄລວົງ ບຸດດາຄຳ ຮອງປະທານສະພາແຫງຊາດ; ເຂົ້າຮ່ວມມີປະທານ-ຮອງປະທານກຳມາທິການພາຍໃນສະພາແຫ່ງຊາດ, ບັນດາທ່ານຮອງລັດຖະມົນຕີ, ຮອງຫົວໜ້າອົງການ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ), ຫົວໜ້າ-ຮອງຫົວໜ້າກົມ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ.



ທ່ານວິໄລວົງບຸນດາຄຳ ກ່າວວ່າ: ກອງປະຊຸມຄັ້ງນີ້ ເພື່ອຄົ້ນຄວ້າ, ກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ປັບປຸງ) ແລະ ຮ່າງກົດໝາຍວ່າດ້ວຍຄັງເງິນແຫ່ງລັດ (ສ້າງໃໝ່) ເນື່ອງຈາກການຈັດຕັ້ງປະຕິບັດ2ກົດໝາຍດັ່ງກ່າວໃນໄລຍະຜ່ານມາ ເຫັນວ່າຍັງມີບາງເນື້ອໃນຍັງບໍ່ທັນມີຄວາມຈະແຈ້ງ ເຊິ່ງເຮັດໃຫ້ການຈັດຕັ້ງປະຕິບັດຕົວຈິງມີຄວາມຫຍຸ້ງຍາກ ເປັນຕົ້ນ: ການແບ່ງຂັ້ນຄຸ້ມຄອງຫົວໜ່ວຍງົບປະມານແຫ່ງລັດ,ຫົວໜ່ວຍງົບປະມານບໍລິຫານວິຊາການ ແລະ ຄັງສະສົມແຫ່ງລັດ, ໂຄງປະກອບລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ,ຄວາມຮັບຜິດຊອບຂອງລັດຖະບານ, ຂອງກະຊວງການເງິນ ແລະ ຂັ້ນທ້ອງຖິ່ນ, ລະບົບງົບປະມານແຫ່ງລັດ, ການແບ່ງຂັ້ນຄຸ້ມຄອງລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ,

ອ່ານຕໍ່ໜ້າ 5



## ປະທານ...

(ຕໍ່ຈາກໜ້າ 1)

ໃນການເຄື່ອນໄຫວຄັ້ງນີ້, ທ່ານ ຈັນທອນ ສິດທິໄຊ ໄດ້ລາຍງານໂດຍຫຍໍ້ກ່ຽວກັບຄວາມເປັນມາ ແລະ ວິໄສທັດຍຸດທະສາດໃນການພັດທະນາ ແລະ ສ້າງຕັ້ງໂຮງງານກັ່ນຫຼອມ ວັດຖຸມີຄ່າ ລາວ-ສາກົນ ເຊິ່ງທ່ານໄດ້ຍົກໃຫ້ເຫັນວ່າ ຜ່ານມາ ປະເທດລາວ ໄດ້ສົ່ງອອກແຮ່ຄຳໃນຮູບແບບວັດຖຸດິບໄປກັ່ນຫຼອມຢູ່ຕ່າງປະເທດ ຈຶ່ງໄດ້ເຮັດໃຫ້ເກີດການສູນເສຍໂອກາດ ແລະ ຜົນປະໂຫຍດທາງດ້ານເສດຖະກິດຢ່າງຫຼວງຫຼາຍທີ່ສປປລາວຄວນໄດ້ຮັບ; ການສ້າງຕັ້ງໂຮງງານກັ່ນຫຼອມ ວັດຖຸມີຄ່າລາວ-ສາກົນຖືເປັນບາດກ້າວອັນສຳຄັນຕໍ່ການປະກອບສ່ວນຈັດຕັ້ງຜັນຂະຫຍາຍຄວາມຕັ້ງໃຈຂອງພັກ ແລະ ລັດຖະບານ ໃນການສ້າງສາພັດທະນາລະບົບນິເວດຂອງອຸດສາຫະກຳຄຳລາວ ໃຫ້ໄດ້ມາດຕະຖານສາກົນ, ຍົກລະດັບອຸດສາຫະກຳແຮ່ທາດ ກໍຄືຄຳທີ່ເປັນຊັບພະຍາກອນທຳມະຊາດອັນອຸດົມສົມບູນແລະມີທ່າແຮງບົ່ມຊ້ອນຂອງປະເທດ ໃຫ້ເກີດການຕໍ່ຍອດເພີ່ມພູນມູນຄ່າຢ່າງເຕັມສ່ວນ. ທ່ານ ຈັນທອນ ສິດທິໄຊ ຍັງກ່າວຕື່ມວ່າ ໂຮງງານກັ່ນຫຼອມ ວັດຖຸມີຄ່າ ລາວ-ສາກົນ ມຸ່ງໝັ້ນຢ່າງແຮງກ້າໃນການຍົກລະດັບການປະຕິບັດງານໃຫ້ສອດຄ່ອງກັບມາດຕະຖານສາກົນຂອງສະມາຄົມຕະຫຼາດຄຳແຫ່ງລອນດອນ ກໍຄື LBMA ດ້ວຍການນຳໃຊ້ນະວັດຕະກຳເຕັກໂນໂລຊີຂັ້ນສູງ ທີ່ປະກອບດ້ວຍຫ້ອງທົດລອງວິເຄາະ ແລະ ເຄື່ອງຈັກອຸປະກອນລະບົບອັດຕະໂນມັດທີ່ທັນສະໄໝ, ມີຄວາມແມ່ນຍຳສູງ, ຮັບປະກັນການຜະລິດທີ່ສະອາດ ປາສະຈາກການທຳລາຍທຳມະຊາດ ແລະ ເປັນມິດກັບສິ່ງແວດລ້ອມ; ການຍຶດໝັ້ນໃນມາດຕະຖານ LBMA ບໍ່ພຽງເປັນການຢັ້ງຢືນເຖິງຄຸນນະພາບຄວາມບໍລິສຸດຂອງໂລຫະມີຄ່າເທົ່ານັ້ນ, ແຕ່ຍັງເປັນການສ້າງຄວາມເຊື່ອໝັ້ນ ແລະ ຍົກລະດັບຄວາມສາມາດໃນການແຂ່ງຂັນຂອງຜະລິດຕະພັນຈາກ ສປປລາວ ໃຫ້ກ້າວສູ່ເວທີການຄ້າສາກົນ ທີ່ທົ່ວໂລກຍອມຮັບ ແລະ ຊື້-ຂາຍແລກປ່ຽນໝູນວຽນໃນຕະຫຼາດຄຳໂລກໄດ້.

ຈາກນັ້ນ,ຄະນະໄດ້ຢ້ຽມຊົມພື້ນທີ່ການຜະລິດຂອງໂຮງງານກັ່ນຫຼອມ ວັດຖຸມີຄ່າ ລາວ-ສາກົນ.

ໂອກາດດັ່ງກ່າວ, ທ່ານ ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຮູ້ສຶກດີໃຈທີ່ໄດ້ມາຢ້ຽມຢາມໂຮງງານກັ່ນຫຼອມ ວັດຖຸມີຄ່າ ລາວ-ສາກົນ ແຫ່ງນີ້ ເຊິ່ງເປັນໂຮງງານກັ່ນຫຼອມຄຳ ແຫ່ງທຳອິດ ແລະ ແຫ່ງດຽວໃນ ສປປລາວ ທີ່ໄດ້ມາດຕະຖານສາກົນ; ພ້ອມນັ້ນ, ກໍຍັງສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ກັບຄວາມມຸ່ງໝັ້ນ ແລະ ຄວາມພະຍາຍາມຂອງຄະນະຜູ້ບໍລິຫານ ທີ່ໄດ້ສ້າງຕັ້ງໂຮງງານກັ່ນຫຼອມທີ່ມີມາດຕະຖານສູງ ແລະ ເປົ້າໝາຍທີ່ຊັດເຈນໃນການກ້າວສູ່ມາດຕະຖານໂລກ ເຊິ່ງຖືເປັນບາດກ້າວທີ່ຖືກຕ້ອງ ແລະ ເປັນຍຸດທະສາດທີ່ສຳຄັນຂອງຊາດ ໃນການຫັນປ່ຽນຈາກການສົ່ງອອກແຮ່ທາດແບບດິບ ມາເປັນການປຸງແຕ່ງເພື່ອສ້າງມູນຄ່າເພີ່ມໃຫ້ແກ່ຊັບພະຍາກອນພາຍໃນປະເທດຢ່າງຍືນຍົງ.

ໃນວັນດຽວກັນ, ຄະນະຍັງໄດ້ໄປຢ້ຽມຢາມທະນາຄານຄຳລາວ ເຊິ່ງໄດ້ຮັບການຕ້ອນຮັບຈາກທ່ານປະທານ, ຮອງປະທານ ບໍລິສັດ ພັທແອວ ໂຮນດິ້ງ ຈຳກັດ ແລະ ໄດ້ຮັບຟັງການສະເໜີ, ລາຍງານໂດຍຫຍໍ້ຂອງທະນາຄານຄຳລາວອີກດ້ວຍ.

(ສພຊ) - ເນື່ອງໃນໂອກາດວັນຄົບຮອບ 70 ປີ ແຫ່ງການສ້າງຕັ້ງສາຍພົວພັນການທູດ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລາຊະອານາຈັກກຳປູເຈຍ (15 ມິຖຸນາ 1956-15 ມິຖຸນາ 2026), ທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ສົ່ງສານອວຍພອນໄປຍັງສົມເດັດ ມະຫາ ຣັດສະເພຍທິກາ ທົມະໄດ ຄຸນ ສຸດາຣີ ປະທານສະພາແຫ່ງຊາດກຳປູເຈຍ ເພື່ອສະແດງຄວາມຊົມເຊີຍເຊິ່ງກັນແລະກັນ ໃນໂອກາດສະເຫຼີມສະຫຼອງວັນສຳຄັນດັ່ງກ່າວຂອງສອງປະເທດ, ທັງເປັນການເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມືອັນດີງາມ ກໍຄືການເປັນຄູ່ຮ່ວມມືຍຸດທະສາດຮອບດ້ານ ແລະ ໝັ້ນຄົງຍາວນານ ລະຫວ່າງ ສປປລາວ ແລະ ລາຊະອານາຈັກກຳປູເຈຍ ໂດຍສະເພາະລະຫວ່າງສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ສະພາແຫ່ງຊາດ ແຫ່ງ ລາຊະອານາຈັກກຳປູເຈຍ ໃຫ້ແຕກດອກອອກຜົນ, ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ກໍຄືເພື່ອສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມືເພື່ອການພັດທະນາຢູ່ໃນພາກພື້ນ ແລະ ໃນໂລກ.

ນອກຈາກນີ້, ໃນໂອກາດດັ່ງກ່າວ ທ່ານ ໄຊສົມພອນ ພົມວິຫານ ກໍໄດ້ສົ່ງສານອວຍພອນເຖິງສົມເດັດ ອັກຄະມະຫາ ເສນາບໍດີ ເຕໂຈ ຮຸນແຊນ ປະທານສະພາສູງ ແຫ່ງ ລາຊະອານາຈັກກຳປູເຈຍ ອີກດ້ວຍ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ**

ນະຄອນຫຼວງວຽງຈັນ, ວັນທີ 15 ມິຖຸນາ 2026

**ສົມເດັດ ມະຫາ ຣັດສະເພຍທິກາ ທົມະໄດ ຄຸນ ສຸດາຣີ,**
**ປະທານສະພາແຫ່ງຊາດ ແຫ່ງ ຣາຊະອານາຈັກກຳປູເຈຍ**
ທີ່ນະຄອນຫຼວງ ພະນົມເປັນ

ສົມເດັດ ທີ່ນັບຖື,

ເນື່ອງໃນໂອກາດວັນຄົບຮອບ 70 ປີ ແຫ່ງການສ້າງຕັ້ງສາຍພົວພັນການທູດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ຣາຊະອານາຈັກກຳປູເຈຍ (15 ມິຖຸນາ 1956- 15 ມິຖຸນາ 2026), ໃນນາມສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ປະຊາຊົນລາວບັນດາເຜົ່າ ແລະ ໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍສົ່ງຄຳອວຍພອນໄຊອັນປະເສີດ ມາຍັງສົມເດັດ ແລະ ຜ່ານສົມເດັດໄປຍັງສະມາຊິກສະພາແຫ່ງຊາດ ແຫ່ງ ຣາຊະອານາຈັກກຳປູເຈຍທຸກທ່ານ.

ຂ້າພະເຈົ້າ ມີຄວາມປິຕິຊົມຊື່ນເປັນຢ່າງຍິ່ງທີ່ເຫັນວ່າ ຕະຫຼອດໄລຍະ 70 ປີຜ່ານມາ ສາຍພົວພັນມິດຕະພາບທີ່ເປັນມູນເຊື້ອມາແຕ່ບູຮານນະການ ລະຫວ່າງ ສອງຊາດ ລາວ-ກຳປູເຈຍ ໄດ້ຮັບການທະນຸຖະໜອມ ແລະ ເພີ່ມພູນຄຸນສ້າງຢ່າງຕໍ່ເນື່ອງໃນທຸກດ້ານ.

ຂ້າພະເຈົ້າ ມີຄວາມມຸ່ງໝັ້ນທີ່ຈະຮ່ວມມືຢ່າງໃກ້ຊິດ ກັບ ສົມເດັດ ເພື່ອສືບຕໍ່ເສີມຂະຫຍາຍສາຍພົວພັນມິດຕະພາບ ອັນເປັນມູນເຊື້ອ ແລະ ການຮ່ວມມືອັນດີງາມ ກໍຄືການເປັນຄູ່ຮ່ວມມືຍຸດທະສາດຮອບດ້ານ ແລະ ໝັ້ນຄົງຍາວນານ ລະຫວ່າງ ສອງປະເທດໃຫ້ແຕກດອກອອກຜົນຍິ່ງໆຂຶ້ນ ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ກໍຄື ເພື່ອສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມື ເພື່ອການພັດທະນາຢູ່ໃນພາກພື້ນ ແລະ ໃນໂລກ.

ອວຍພອນໃຫ້ສາຍພົວພັນມິດຕະພາບ, ຄວາມສາມັກຄີອັນເປັນມູນເຊື້ອທີ່ມີມາແຕ່ດົນນານ ແລະ ການເປັນຄູ່ຮ່ວມມືຍຸດທະສາດຮອບດ້ານ ແລະ ໝັ້ນຄົງຍາວນານ ລະຫວ່າງ ສອງປະເທດ ກໍຄື ລະຫວ່າງ ສອງອົງການນິຕິບັນຍັດພວກເຮົາ ຈົ່ງນັບມື້ນັບຂະຫຍາຍຕົວ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ.

ດ້ວຍຄວາມນັບຖືຢ່າງສູງ,

**ໄຊສົມພອນ ພົມວິຫານ**
**ປະທານສະພາແຫ່ງຊາດ ແຫ່ງ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**



## ທາບທາມ...

(ຕໍ່ຈາກໜ້າ 1)

ປະຊາຊົນສະບັບທຳອິດ ແມ່ນໄດ້ປະກາດໃຊ້ໃນປີ 2007 ຕໍ່ມາໄດ້ມີ ການປັບປຸງຄັ້ງທີໜຶ່ງ ແລະ ຖືກຮັບຮອງ ແລະ ປະກາດໃຊ້ໃນປີ 2017 ເປັນສະບັບນຳໃຊ້ໃນປັດຈຸບັນເປັນບ່ອນອີງທີ່ສຳຄັນໃຫ້ແກ່ກົມກອງເຫຼົ່າວິຊາສະເພາະ, ນາຍ ແລະ ພົນຕຳຫຼວດຂອງກຳລັງປກສມີຄວາມໜັກແໜ້ນເຂັ້ມແຂງ, ຈັດຕັ້ງເຄື່ອນໄຫວວຽກງານວິຊາສະເພາະ, ການຊີ້ນຳ-ບັນຊາ, ຄຸ້ມຄອງ, ຕິດຕາມກວດກາກຳລັງໄດ້ທັນເຂົ້າສູ່ກົດໝາຍ ແລະ ລະບຽບຫຼັກການເທື່ອລະກ້າວ; ມາຮອດປັດຈຸບັນ, ກົດໝາຍສະບັບນີ້ ໄດ້ຈັດຕັ້ງປະຕິບັດເປັນເວລາກວ່າ8ປີເຊິ່ງເຮັດໃຫ້ບາງພາກ, ໝວດ ແລະ ມາດຕາ ມີເນື້ອໃນບໍ່ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ການເຕີບໃຫຍ່ຂະຫຍາຍຕົວຂອງກຳລັງປ້ອງກັນຄວາມສະຫງົບປະຊາຊົນ ຈຶ່ງມີຄວາມຈຳເປັນຕ້ອງໄດ້ປັບປຸງເພື່ອໃຫ້ມີຄວາມຖືກຕ້ອງ,ສອດຄ່ອງກັບສະພາບຄວາມເປັນຈິງໃນປັດຈຸບັນ, ສະເພາະໜ້າ ແລະ ຍາວນານ.

ຜ່ານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ, ກະຊວງປ້ອງກັນຄວາມສະຫງົບ ຈຶ່ງມີຄວາມຈຳ ເປັນຕ້ອງໄດ້ປັບປຸງໃນບາງພາກ, ໝວດ ແລະ ມາດຕາ ເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງກຳລັງທັງເປັນການຍົກສູງຖານະ, ບົດບາດໜ້າທີ່ການເມືອງຂອງກຳລັງ ປກສ ໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງ; ປັບປຸງແບບແຜນ ວິທີເຮັດວຽກ, ການຊີ້ນຳ, ບັນຊາ, ຄຸ້ມຄອງ, ຕິດຕາມກວດກາຈັນຍາບັນ-ຈັນຍາທຳ ຂອງນາຍ ແລະ ພົນຕຳຫຼວດ ໃນ ກຳລັງ ປກສ ທັງເປັນບ່ອນອີງໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານວິຊາສະເພາະໃນທົ່ວກຳລັງປ້ອງກັນຄວາມສະຫງົບປະຊາຊົນ ໃຫ້ແທດເໝາະ, ຖືກຕ້ອງ ແລະ ສອດຄ່ອງຂຶ້ນກວ່າເກົ່າ ໄປຕາມທິດການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ດ້ວຍກົດໝາຍຢ່າງເຂັ້ມງວດເທື່ອລະກ້າວ ໃນການປົກປັກຮັກສາຄວາມສະຫງົບທາງດ້ານການເມືອງ,ຄວາມເປັນລະບຽບຮຽບຮ້ອຍທາງດ້ານເສດຖະກິດ-ສັງຄົມໃຫ້ມີຄວາມຮັບປະກັນເຮັດໃຫ້ປະເທດຊາດມີສະຖຽນລະພາບຄວາມ ໝັ້ນຄົງ.

ບັນດາຜູ້ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນສຸມໃສ່ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາໃສ່ບັນດາເນື້ອໃນ, ພາກ, ໝວດ ແລະ ມາດຕາ ທີ່ໄດ້ຮັບການປັບປຸງ ແລະ ເພີ່ມເຂົ້າໃໝ່ ເພື່ອເປັນຂໍ້ມູນອັນສຳຄັນໃຫ້ແກ່ຄະນະຮັບຜິດຊອບ ນຳໄປພິຈາລະນາປັບປຸງຮ່າງກົດໝາຍສະບັບນີ້ ໃຫ້ມີຄວາມຖືກຕ້ອງ, ຄົບຖ້ວນ, ສົມບູນແລະສາມາດນຳໄປຈັດ ຕັ້ງປະຕິບັດໃຫ້ເກີດຜົນສູງສຸດໃນຕໍ່ໜ້າ.

**(ພາບ-ຂ່າວ: ແກ້ວ ອຸເຜີດ,**
**ເພຈ: ຄວາມສະຫງົບ**
**Lao Security News)**

# ຍົກລະດັບບົດບາດ-ສ້າງຄວາມເຂັ້ມແຂງໃຫ້ ສສຊ ຊຸດທີ X ແລະ ສປນວ ຊຸດທີ V




(ສພຂ)- ໃນວັນທີ 8 ມິຖຸນາຜ່ານມານີ້, ທີ່ຫ້ອງວ່າການປົກຄອງນະຄອນຫຼວງວຽງຈັນ ໄດ້ມີການຈັດກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ປະຈຳເຂດເລືອກຕັ້ງທີ 1 ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ (ສສປນວ) ຊຸດທີ V ໃຫ້ກຽດເປັນປະທານໂດຍທ່ານ ນະຄະເສນ ສີຫາລາດ ກຳມະການພັກ ນະຄອນຫຼວງວຽງຈັນ ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ໂດຍມີບັນດາທ່ານ ສສຊ ຊຸດທີ X ປະຈຳເຂດເລືອກຕັ້ງທີ 1 ສສປນວ ຊຸດທີ V ໃນນາມນັກສຳມະນາກອນ ພ້ອມດ້ວຍຄະນະວິທະຍາກອນຈາກສະພາແຫ່ງຊາດ ເຂົ້າຮ່ວມ.

ທ່ານ ນະຄະເສນ ສີຫາລາດ ກ່າວວ່າ: ການຈັດກອງປະຊຸມເຝິກອົບຮົມຄັ້ງນີ້ ເພື່ອສ້າງຄວາມພ້ອມໃນການລົງພົບປະປະຊາຊົນ ເນື່ອງຈາກໃນກາງເດືອນມິຖຸນານີ້ ມີແຜນການລົງພົບປະປະຊາຊົນຕົວຈິງ ກອງປະຊຸມນີ້ຈຶ່ງຈັດຂຶ້ນເພື່ອເປັນການຕຽມຄວາມພ້ອມ ແລະ ຕອບສະໜອງບົດຮຽນ-ປະສົບການໃຫ້ແກ່ສະມາຊິກສະພາ ໂດຍສະເພາະແມ່ນສະມາຊິກສະພາໃໝ່ທີ່ຍັງບໍ່ທັນມີປະສົບການມາກ່ອນ ເພື່ອເພີ່ມທະວີຄວາມຮູ້ ຄວາມເຂົ້າໃຈ ແລະ ທັກສະຕົວຈິງໃຫ້ແກ່ສະມາຊິກສະພາ ໃນການປະຕິບັດພາລະບົດບາດເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນ ບໍ່ວ່າຈະເປັນການພິຈາລະນາ ການຮັບຮອງເອົານິຕິກຳ ການຕົກລົງບັນຫາສຳຄັນພື້ນຖານ ແລະ ວຽກງານຕິດຕາມກວດກາ ເພື່ອພັດທະນາທັກສະການປາກເວົ້າແລະການປະກອບຄຳເຫັນ ຝຶກຝົນໃຫ້ສະມາຊິກສະພາມີຄວາມຊຳນານໃນການຄົ້ນຄວ້າ ກະກຽມຂໍ້ມູນແລະການປະກອບຄຳຄິດຄຳເຫັນ ໃຫ້ມີຄວາມສອດຄ່ອງກັບລັດຖະທຳມະນູນ ກົດໝາຍ ແລະ ສະພາບຄວາມເປັນຈິງຂອງເສດຖະກິດ-ສັງຄົມ.

ທ່ານ ນະຄະເສນ ສີຫາລາດ ໄດ້ກ່າວເນັ້ນໜັກວ່າ ໃນດ້ານທິດສະດີ ແລະ ຫຼັກການການປະຕິບັດໜ້າທີ່ ແລະ ການມີຄຳເຫັນກັບປະຊາຊົນອາດເບິ່ງຄືວ່າບໍ່ສັບສົນ ແຕ່ໃນແງ່ພຶດຕິກຳຕົວຈິງ ແມ່ນມີຫຼາຍດ້ານທີ່ຕ້ອງເອົາໃຈໃສ່ເປັນພິເສດ ດັ່ງນັ້ນ ທ່ານຈຶ່ງໄດ້ຮຽກຮ້ອງໃຫ້ບັນດານັກສຳມະນາກອນທຸກທ່ານ ຈົ່ງສຸມສະຕິປັນຍາ ຍົກສູງຄວາມຮັບຜິດຊອບ ຕັ້ງໜ້າຄົ້ນຄວ້າ ແລະ ແລກປ່ຽນບົດຮຽນນຳກັນຢ່າງກົງໄປກົງມາ ເພື່ອເກັບກ່ຽວເອົາຄວາມຮູ້ ແລະ ວິທີການຕ່າງໆ ຈາກຄະນະວິທະຍາກອນ ໄປໝູນໃຊ້ເຂົ້າໃນການປະຕິບັດໜ້າທີ່ການເມືອງຂອງຕົນ ໂດຍສະເພາະແມ່ນການລົງເຄື່ອນໄຫວພົບປະ ແລະ ຮັບຟັງຄຳຄິດຄຳເຫັນຈາກປະຊາຊົນໃນຕໍ່ໜ້າ ໃຫ້ເກີດປະສິດທິຜົນສູງສຸດ.

# ສສຊ ພົບປະຢ້ຽມຢາມປະຊາຊົນ ບ້ານປາເລາະ ແລະ ບ້ານກະແຫຼງພູ



(ສພຂ) - ວັນທີ 2 ມິຖຸນາ 2026, ທ່ານ ສາລີ ວົນລາວັນ ຄະນະປະຈຳພັກແຂວງ, ປະທານແນວລາວສ້າງຊາດແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13, ທ່ານ ຄຳຜອງ ສົມວິຈິດ ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ສສຊ ປະຈຳເຂດເລືອກຕັ້ງທີ 13 ພ້ອມດ້ວຍທ່ານ ຈິນດາວັນ ບຸດລາສີ ເລຂາຄະນະບໍລິຫານພັກເມືອງ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງນອງ ແລະ ຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງນອງ ໄດ້ເຄື່ອນໄຫວພົບປະຢ້ຽມຢາມພໍ່ແມ່ປະຊາຊົນ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງ ຊຸດທີ V ຢູ່ບ້ານປາເລາະ ແລະບ້ານກະແຫຼງພູ ເມືອງນອງ ໂດຍໄດ້ຮັບການຕ້ອນຮັບຈາກອຳນາດການປົກຄອງ ແລະ ພໍ່ແມ່ປະຊາຊົນ.

ໃນການລົງເຄື່ອນໄຫວ ໄດ້ຮັບຟັງການລາຍງານຫຍໍ້ກ່ຽວກັບສະພາບການລວມຂອງບ້ານ, ການຈັດຕັ້ງປະຕິບັດວຽກງານ ແລະ ສະເໜີບາງບັນຫາ ທີ່ຕິດພັນກັບຊີວິດການເປັນຢູ່ຂອງປະຊາຊົນພາຍໃນບ້ານ. ຈາກນັ້ນ, ບັນດາທ່ານ ສສຊ-ສສຂ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງ ຊຸດທີ V ເຊິ່ງໄດ້ພິຈາລະນາ ຮັບຮອງເປັນຕົ້ນ: ການເລືອກຕັ້ງຕຳແໜ່ງສຳຄັນຕ່າງໆ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ, ພິຈາລະນາ ຮັບຮອງການປັບປຸງໂຮມກຳມາທິການຂອງສະພາແຫ່ງຊາດ ແລະ ບັນດາວຽກງານຂອງລັດຖະບານ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງລັດຖະບານ ໃນນັ້ນ, ບັນຫາສຳຄັນ ແມ່ນໄດ້ພິຈາມາ ຮັບຮອງ ເອົາແຜນການສ້າງເສັ້ນທາງລົດໄຟ ຈາກແຂວງຄຳມ່ວນ ຫາ ສສ ຫວຽດນາມ, ແຜນການສ້າງ ແລະ ປັບປຸງ ລັດຖະທຳມະນູນ ແລະ ກົດໝາຍ, ວຽກງານໃນຂົງເຂດສຶກສາທິການ, ສາທາລະນະສຸກ ແລະ ແຜນການແກ້ໄຂບັນຫາຄວາມຫຍຸ້ງຍາກຕ່າງໆທີ່ເກີດຂຶ້ນໃນແຕ່ລະທ້ອງຖິ່ນ ເຊິ່ງປະຊາຊົນຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ຢ່າງເລິກເຊິ່ງຕໍ່ເນື້ອໃນດັ່ງກ່າວ; ພ້ອມນັ້ນ, ຍັງຊີ້ແຈງອະທິບາຍຕໍ່ບາງຂໍ້ສະເໜີ ພ້ອມທັງຮຽກຮ້ອງໃຫ້ປະຊາຊົນຜູ້ມີສິດເລືອກຕັ້ງທັງ 2 ບ້ານ ຈົ່ງສືບຕໍ່ຮັກສາມູນເຊື້ອອັນດີງາມ, ສ້າງຄວາມສາມັກຄີພາຍໃນ, ປະກອບສ່ວນທຸກກຳລັງແຮງໃນການພັດທະນາເສດຖະກິດ-ສັງຄົມ ກໍຄືພັດທະນາຊີວິດການເປັນຢູ່ສ້າງເສດຖະກິດຄອບຄົວໃຫ້ມີຄວາມເຂັ້ມແຂງເປັນກ້າວໆ.



# ສສຊ ແລະ ສສຂ ເຄື່ອນໄຫວພົບປະ ຜູ້ມີສິດເລືອກຕັ້ງເມືອງໄຊບົວທອງ




(ສພຂ) - ວັນທີ 2-4 ມິຖຸນາ 2026, ສະມາຊິກສະພາແຫ່ງຊາດ(ສສຊ)ປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງໄຊບົວທອງ ນຳໂດຍທ່ານ ສາຍຄຳ ພະໄຊສິດທິເດດ ກຳມະການປະຈຳພັກແຂວງ, ສສຊ ປະຈຳເຂດເລືອກຕັ້ງທີ 12 ພ້ອມດ້ວຍທ່ານ ນາງ ກຽນຕາ ວັນມະນາ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງຄຳມ່ວນ, ສສຂ ປະຈຳເຂດເລືອກຕັ້ງເມືອງ ແລະ ທ່ານ ສິນນະສອນ ແສງຈັນທະວົງ ເລຂາຄະນະບໍລິຫານງານພັກເມືອງ, ສສຂ ປະຈຳເຂດເລືອກຕັ້ງເມືອງ ພ້ອມດ້ວຍ ສສຂ ປະຈຳເຂດເລືອກຕັ້ງເມືອງໄຊບົວທອງ ໄດ້ເຄື່ອນໄຫວພົບປະ ປະຊາຊົນ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ແລະ ສະພາປະຊາຊົນແຂວງ (ສພຂ)ຄຳມ່ວນ ຊຸດທີ V, ມະຕິ ກອງປະຊຸມໃຫຍ່ຄະນະຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ, ມະຕິ ກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກແຂວງຄຳມ່ວນ ຄັ້ງທີ XI ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ເລກທີ 57/ສພຊ, ລົງວັນທີ 28 ມິຖຸນາ 2024 ຢູ່ບ້ານນາໂມ້, ບ້ານປ່າກ້ວຍໜອງບອນ, ບ້ານຜາໂຄ້ງ, ບ້ານປ່າກ້ວຍທົ່ງ, ບ້ານນານ້ອຍ, ບ້ານນ້ຳກະປໍ, ບ້ານໜອງທາດ, ບ້ານນາພ້າວ, ບ້ານແກ້ງຈອນ, ບ້ານນາປ່າຄາ, ບ້ານໜອງຜື ແລະ ບ້ານທ່າແຮ ເມືອງໄຊບົວທອງ.

ພ້ອມນັ້ນ, ບັນດາທ່ານ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ12 ແລະ ສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງເມືອງຍັງໄດ້ມອບເຄື່ອງ ອຸປະໂພກ, ບໍລິໂພກ ໃຫ້ກັບຄອບຄົວທຸກຍາກຢູ່ບ້ານຜາໂຄ້ງ, ບ້ານນາໂມ້ ແລະ ເຄື່ອງກິລາຈຳນວນໜຶ່ງໃຫ້ໂຮງຮຽນປະຖົມບ້ານປ່າກ້ວຍໜອງບອນ; ພ້ອມທັງເຄື່ອນໄຫວຢ້ຽມຢາມໂຮງຮຽນມູນລະປະຖົມ ບ້ານນານ້ອຍ ແລະ ໂຄງການກໍ່ສ້າງຂົວຢູ່ບ້ານແກ້ງຈອນ ຕື່ມອີກ.



# ສສຊ-ສສຂ ເຜີຍແຜ່ຜົນສຳເລັດ ກອງປະຊຸມຢູ່ເມືອງເຊໂປນ



(ສພຂ) - ວັນທີ 4 ມິຖຸນານີ້ ທີ່ສະໂມສອນເມືອງເຊໂປນ, ໄດ້ມີກອງປະຊຸມເຜີຍແຜ່ຜົນສຳເລັດກອງປະຊຸມຄົບປະຖົມມະລຶກ ຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ແລະ ສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ຊຸດທີ V ການເປັນປະທານຂອງທ່ານດຣ. ຈັນທະລາພາມີສິດຫົວໜ້າພະແນກສາທາລະນະສຸກແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ 13, ແລະ ທ່ານ ພົງຄຳຮັກ ບຸດທະວົງ ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງເຊໂປນ ພ້ອມຄະນະ; ເຂົ້າຮ່ວມມີຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ພະນັກງານຫຼັກແຫຼ່ງເມືອງ, ຄະນະກອງບັນຊາການປ້ອງກັນຊາດ-ປ້ອງກັນຄວາມສະຫງົບເມືອງ, ຄະນະຫ້ອງການອ້ອມຂ້າງເມືອງ ພ້ອມພະນັກງານ-ລັດຖະກອນ ຕະຫຼອດຮອດພໍ່ແມ່ປະຊາຊົນເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມ ສສຊ-ສສຊ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມຄົບປະຖົມມະລຶກ ຂອງ ສພຊ ຊຸດທີ X ແລະ ສພຂ ສະຫວັນນະເຂດ ຊຸດທີ V ເພື່ອໃຫ້ຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ແລະເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກລະບຽບກົດໝາຍ ຂອງລັດ ແລະ ແຜນພັດທະນາເສດຖະກິດ-ສັງຄົມຢ່າງເລິກເຊິ່ງ. ຈາກນັ້ນ, ກໍເປີດໂອກາດໃຫ້ຜູ້ທີ່ເຂົ້າຮ່ວມ ໄດ້ມີຄຳເຫັນແລກປ່ຽນ ແລະ ຄຳສະເໜີ ທີ່ຕິດພັນກັບການດຳລົງຊີວິດ ຂອງພໍ່ແມ່ປະຊາຊົນ ທີ່ພົບຄວາມຫຍຸ້ງຍາກ ເພື່ອເປັນຂໍ້ມູນນຳສະເໜີຂັ້ນເທິງ ຄົ້ນຄວ້າ, ພິຈາລະນາ ແລະ ປະສານສົມທົບນຳພາກສ່ວນທີ່ກ່ຽວຂ້ອງພິຈາລະນາແກ້ໄຂຕາມສິດພາລະບົດບາດຂອງຕົນ ເຊິ່ງບັນຫາທີ່ປະຊາຊົນສະເໜີແມ່ນຕິດພັນກັບການເຂົ້າມາຊົມໃຊ້ຂອດການບໍລິການຢູ່ໂຮງໝໍເມືອງ, ບັນຫາປະກົດການຫຍໍ້ທໍ້ສັງຄົມ ເປັນຕົ້ນການກິນນ້ຳກະທອມ, ສູບພໍອດ, ດື່ມຄຳລາເຈນ,ຢາສູບໄຟຟ້າແລະອື່ນໆ; ລາຄານ້ຳມັນຕົ້ນ, ການປະລະການຮຽນ,ເສັ້ນທາງລະຫວ່າງບ້ານຕໍ່ບ້ານ, ບັນຫາໄຟຟ້າ; ເຊິ່ງບາງບັນຫາ ສສຊ-ສສຂກໍໄດ້ມີຄຳເຫັນອະທິບາຍ, ຊີ້ແຈງ ກັບທີ່ ສ່ວນບັນຫາໃດທີ່ຕິດພັນກັບຫຼາຍພາກສ່ວນຈະໄປນຳສະເໜີຕໍ່ຂະແໜງການກ່ຽວຂ້ອງ ເພື່ອນຳໄປປຶກສາຫາລື ແລະ ຄົ້ນຄວ້າແກ້ໄຂໃນຂັ້ນຕໍ່ໄປ.

# ກອງປະຊຸມຄະນະປະຈຳສະພາປະຊາຊົນ ແຂວງຈຳປາສັກ ປະຈຳເດືອນພຶດສະພາ



(ສພຂ) - ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງຈຳປາສັກ ປະຈຳເດືອນພຶດສະພາ 2026 ໄດ້ຈັດວັນທີ 3 ມິຖຸນາ 2026, ຂຶ້ນຢູ່ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງຈຳປາສັກ ພາຍໃຕ້ການເປັນປະທານຂອງທ່ານ ອາລຸນໄຊ ສູນນະລາດ ເລຂາຄະນະບໍລິຫານພັກແຂວງ, ປະທານຄະນະປະຈຳສະພາປະຊາຊົນແຂວງຈຳປາສັກ; ຮອງປະທານຄະນະປະຈຳສະພາປະຊາຊົນ, ກຳມະການຄະນະປະຈຳ, ຄະນະກຳມະການ, ຄະນະຫ້ອງວ່າການ ແລະ ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານໂດຍຫຍໍ້ ການຈັດຕັ້ງປະຕິບັດວຽກງານປະຈຳເດືອນພຶດສະພາແລະແຜນການເດືອນມິຖຸນາ 2026 ຂອງຄະນະປະຈຳສະພາປະຊາຊົນແຂວງ ແລະຄົ້ນຄວ້າໜັງສືສະເໜີຂອງຄະນະກຳມະການປົກຄອງແຂວງຈຳປາສັກ ກ່ຽວກັບການຂໍພິຈາລະນາມູນຄ່າລວມ ຂອງວຽກຊົດເຊີຍສິ່ງກີດຂວາງ ສຳລັບສັນຍາທີ 01 ຂອງໂຄງການພັດທະນາແຄມຂອງໃນໄລຍະທີ 2 (EDCF LAO-19); ໜັງສືສະເໜີກ່ຽວກັບການຂໍພິຈາລະນາຮັບຮອງເອົາຂໍ້ຕົກລົງວ່າດ້ວຍການຮັບຮອງລາຄາຫົວໜ່ວຍ ແລະ ທົດແທນຄ່າເສຍຫາຍສັບສິນໃຫ້ແກ່ປະຊາຊົນ ທີ່ໄດ້ຮັບຜົນກະທົບ ຈາກໂຄງການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ 500 ກິໂລໂວນ; ໜັງສືສະເໜີກ່ຽວກັບການສະເໜີຮັບຮອງ ການຈັດສັນແຜນງົບປະມານແຫ່ງລັດບ້ວງເງິນເກີນແຜນ ປີ 2025 ຂອງແຂວງຈຳປາສັກ ແລະ ໜັງສືສະເໜີກ່ຽວກັບການສະເໜີຍົກຍາຍພະນັກງານນຳພາ-ຄຸ້ມຄອງແຂວງຈຳປາສັກ.

ທ່ານ ປອ. ອາລຸນໄຊ ສູນນະລາດ ໄດ້ເນັ້ນໜັກໃຫ້ສືບຕໍ່ປະສານສົມທົບຄືນກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າປຶກສາຫາລື, ເກັບກຳຂໍ້ມູນໃຫ້ລະອຽດ ນຳມາຄົ້ນຄວ້າວິເຄາະໄຈ້ແຍກຢ່າງຖີ່ຖ້ວນເລິກເຊິ່ງ ແລ້ວລາຍງານຕໍ່ຄະນະປະຈຳສະພາປະຊາຊົນແຂວງ ເພື່ອຄົ້ນຄວ້າພິຈາລະນາໃນຂັ້ນຕໍ່ໄປທັງພ້ອມກັນສືບຕໍ່ຈັດຕັ້ງປະຕິບັດໜ້າທີ່ຄວາມຮັບຜິດຊອບຂອງຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ລັດຖະທຳມະນູນ ແລະ ກົດໝາຍ ກຳນົດໄວ້ ຍາດໄດ້ຜົນສຳເລັດຢ່າງມີປະສິດທິພາບ.

**(ສົມວິຈິດ ໄຊມົນຕີ)**



# ຮອງປະທານສະພາປະຊາຊົນແຂວງຈຳປາສັກ ພົບປະນາຍ ແລະ ພົນທະຫານ




(ສພຂ) - ວັນທີ 2 ມິຖຸນາ 2026, ທ່ານ ແກ້ວລັດຕະນະ ສີຫາວົງ ຮອງປະທານສະພາປະຊາຊົນແຂວງ, ຮອງປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ສົມທົບກັບທ່ານ ອຳນວຍ ເຮືອງວົງສາ ເລຂາຄະນະບໍລິຫານພັກເມືອງ, ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ (ສສຂ) ເຂດເລືອກຕັ້ງເມືອງບາຈຽງຈະເລີນສຸກ ພ້ອມດ້ວຍບັນດາທ່ານ ສສຂ ປະຈຳເຂດເລືອກຕັ້ງເມືອງບາຈຽງຈະເລີນສຸກ ໄດ້ເຄື່ອນໄຫວພົບປະຢ້ຽມຢາມນາຍ ແລະ ພົນທະຫານ ແລະ ເຜີຍແຜ່ເນື້ອໃນຜົນສຳເລັດ ກອງປະຊຸມຄົບປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງຈຳປາສັກ ຊຸດທີ V ຢູ່ໂຮງຮຽນກໍ່ສ້າງນາຍສິບ ເລກ 2 ວຽງໄຊ ແລະ ກອງພົນທະຫານຮາບທີ 5 ມີຄະນະພັກ-ຄະນະບັນຊາ ພ້ອມດ້ວຍນາຍ-ພົນທະຫານເຂົ້າຮ່ວມຢ່າງພ້ອມພຽງ.

ໃນການເຄື່ອນໄຫວໄດ້ຮັບຟັງການລາຍງານສະພາບລວມການຈັດຕັ້ງປະຕິບັດວຽກງານລວມ ທີ່ເຫັນໄດ້ຜົນສຳເລັດພົ້ນເດັ່ນ, ວຽກງານທີ່ຈະຕ້ອງໄດ້ສືບຈັດຕັ້ງປະຕິບັດຕາມແຜນການໃຫ້ສຳເລັດ ແລະ ຮັບຟັງຄຳສະເໜີບາງບັນຫາທີ່ມີຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານ; ຈາກນັ້ນ, ທ່ານ ແກ້ວລັດຕະນະ ສີຫາວົງ ພ້ອມດ້ວຍ ສສຂ ໄດ້ຜັດປ່ຽນກັນເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມຄົບປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງຈຳປາສັກ ຊຸດທີ V ເຊິ່ງໄດ້ພິຈາລະນາຮັບຮອງ ເປັນຕົ້ນການເລືອກຕັ້ງຕຳແໜ່ງສຳຄັນຕ່າງໆ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງຈຳປາສັກ ໃຫ້ຄົບຖ້ວນຕາມອົງປະກອບຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ການປັບປຸງໂຮມກຳມາທິການຂອງສະພາແຫ່ງຊາດແລະບັນດາວຽກງານຂອງລັດຖະບານເປັນຕົ້ນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງລັດຖະບານ ໃນນັ້ນ, ໄດ້ພິຈານາຮັບຮອງ ແຜນການສ້າງ ແລະ ປັບປຸງ ລັດຖະທຳມະນູນ ແລະ ກົດໝາຍ; ວຽກງານໃນຂົງເຂດສຶກສາທິການ, ສາທາລະນະສຸກ ແລະ ແຜນການແກ້ໄຂບັນຫາຄວາມຫຍຸ້ງຍາກຕ່າງໆທີ່ເກີດຂຶ້ນໃນແຕ່ລະທ້ອງຖິ່ນ.

ພ້ອມນັ້ນ, ຍັງໄດ້ຊີ້ແຈງອະທິບາຍຕໍ່ບາງຄຳສະເໜີ ທັງຮຽກຮ້ອງໃຫ້ນາຍ ແລະ ພົນທະຫານ ຈົ່ງພ້ອມກັນຮັກສາມູນເຊື້ອອັນດີງາມ, ສ້າງຄວາມສະໜາມສາມັກຄີພາຍໃນ,ປະກອບສ່ວນທຸກກຳລັງແຮງໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ, ສືບຕໍ່ຈັດຕັ້ງປະຕິບັດຕາມທິດທາງແຜນການວຽກງານປັບປຸງກໍ່ສ້າງກົມກອງໃຫ້ເປັນປົກກະຕິຕໍ່ເນື່ອງ, ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານອົບຮົມຫັດແອບປະຈຳໄຕມາດ, ຖືສຳຄັນວຽກປັບປຸງກໍ່ສ້າງກຳລັງ ແລະ ວຽກງານທຳງານຜະລິດຕາມລະດູການ ໃຫ້ສຳເລັດຕາມຄາດໝາຍທີ່ວາງໄວ້ ແລະ ຍັງໄດ້ມອບອຸປະກອນກິລາຈຳນວນໜຶ່ງໃຫ້ແກ່ 2 ພາກສ່ວນ.

ວັນທີ 4 ມິຖຸນາ 2026 ທ່ານ ແກ້ວລັດຕະນະສີຫາວົງ ພ້ອມດ້ວຍທ່ານ ໄກສອນ ລາດສະວົງ ສສຂ ເຂດເລືອກຕັ້ງນະຄອນປາກເຊ ແລະ ຄະນະ ສສຂ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມຄົບປະຖົມມະລຶກ ຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງຈຳປາສັກ ຊຸດທີ V ຢູ່ກອງບັນຊາການ ປກສ ແຂວງຈຳປາສັກ; ໂດຍການຕ້ອນຮັບຂອງທ່ານ ພັອ ສີວິໄລ ແກ້ວປະເສີດ ຮອງກອງບັນຊາການ ປກສແຂວງຈຳປາສັກ; ມີຄະນະພັກ-ຄະນະບັນຊາ ຈາກກົມກອງອ້ອມຂ້າງກອງບັນຊາການ ປກສ ແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

**(ໄຊຊະນະ ວັນນະພອນ)**



## ຫາລື...

(ຕໍ່ຈາກໜ້າ 1)

ເມວ ບາໂລ (Mel Barlow) ເອກອັກຄະລາຊະທູດອັງກິດປະຈຳ ສປປລາວ ພ້ອມດ້ວຍຜູ້ຕາງໜ້າຈາກສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ, ອົງການອະນຸລັກທຳມະຊາດໂລກ ປະຈຳ ສປປລາວ (WWF-Lao), ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມພາຍໃນເຂົ້າຮ່ວມ.

ທ່ານ ກອງແກ້ວ ໄຊສົງຄາມ ກ່າວວ່າ: ແຮ່ຫີນ ແລະ ຊາຍ ແມ່ນຊັບພະຍາກອນທຳມະຊາດທີ່ມີຄວາມໝາຍຄວາມສຳຄັນ, ຕິດພັນກັບການດຳລົງຊີວິດຂອງປະຊາຊົນ ແລະ ໄດ້ຮັບການນຳໃຊ້ຫຼາຍທີ່ສຸດ ໂດຍສະເພາະເຂົ້າໃນການກໍ່ສ້າງພື້ນຖານໂຄງລ່າງເສັ້ນທາງຄົມມະນາຄົມ, ຂົວຂ້າມນ້ຳ, ຕົວເມືອງ, ອາຄານສະຖານທີ່ຕ່າງໆ ແລະ ອື່ນໆ; ໂດຍປາສະຈາກການນຳໃຊ້ຫີນ ແລະ ຊາຍແລ້ວ ການກໍ່ສ້າງພື້ນຖານໂຄງລ່າງຂອງພວກເຮົາ ກໍຈະປະສົບກັບບັນຫາ. ສະນັ້ນ, ການຄຸ້ມຄອງການຂຸດຄົ້ນ ແລະ ນຳໃຊ້ຊັບພະຍາກອນດັ່ງກ່າວຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ມີຄວາມຍືນຍົງ ຈຶ່ງແມ່ນຄວາມຕ້ອງການ ແລະ ຈຳເປັນຂອງການພັດທະນາເສດຖະກິດ-ສັງຄົມຢູ່ປະເທດຂອງພວກເຮົາ.

ສູນກາງພັກ ແລະ ລັດຖະບານຂອງ ສປປລາວ ໃຫ້ຄວາມສຳຄັນຫຼາຍຕໍ່ການພັດທະນາເສດຖະກິດ-ສັງຄົມ ຕາມທິດສີຂຽວ-ຍືນຍົງກໍຄືການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດທີ່ມີຢູ່ຢ່າງຈຳກັດຂອງພວກເຮົາ ໃຫ້ເກີດຜົນປະໂຫຍດສູງສຸດ, ລວມທັງການຄຸ້ມຄອງ ແລະ ນຳໃຊ້ຫີນ ແລະ ຊາຍ; ເພື່ອບັນລຸເປົ້າໝາຍການພັດທະນາຕາມທິດສີຂຽວ-ຍືນຍົງດັ່ງກ່າວ, ສູນກາງພັກ ແລະ ລັດຖະບານ ໄດ້ມີຫຼາຍນະໂຍບາຍ, ກົດໝາຍ, ກົດລະບຽບ ແລະ ກົນໄກການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດດັ່ງກ່າວ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ຄວາມຍືນຍົງ ເປັນຕົ້ນ: ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ຮອດປີ 2030, ຍຸດທະສາດປົກປັກຮັກສາສິ່ງແວດລ້ອມ, ກົດໝາຍວ່າດ້ວຍແຮ່ທາດ, ກົດໝາຍວ່າດ້ວຍສິ່ງແວດລ້ອມ ແລະ ອື່ນໆ.

ໂດຍໄດ້ຮັບການສະໜັບສະໜູນທາງດ້ານງົບປະມານຈາກລັດຖະບານຂອງປະເທດອັງກິດ ຜ່ານອົງການອະນຸລັກທຳມະຊາດໂລກ ປະຈຳ ສປປລາວ, ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ ໄດ້ດຳເນີນການສຶກສາຫົວຂໍ້ດັ່ງກ່າວ ໂດຍປະສານສົມທົບກັບມະຫາວິທະຍາໄລແຫ່ງຊາດ, ສະຖາບັນຄົ້ນຄວ້າ ແລະ ພາກສ່ວນກ່ຽວຂ້ອງຕ່າງໆ; ຈຸດປະຂອງການສຶກສາຄັ້ງນີ້ ເພື່ອທົບທວນຄືນບັນດານະໂຍບາຍ, ກົດໝາຍ, ກົດລະບຽບ ແລະ ກົນໄກປະສານງານຕ່າງໆທີ່ກ່ຽວຂ້ອງກັບການຄຸ້ມຄອງການຂຸດຄົ້ນແຮ່ຫີນ ແລະ ຊາຍ ຕາມລຳແມ່ນ້ຳຂອງ ແລະ ນ້ຳສາຂາ ຢູ່ ສປປ ລາວ ເພື່ອຊອກໃຫ້ເຫັນຜົນສຳເລັດ, ຂໍ້ຄົງຄ້າງ, ຈຸດອ່ອນ ແລະ ຊ່ອງວ່າງຂອງລະບົບດັ່ງກ່າວ ກໍຄືເພື່ອສະໜອງຂໍ້ມູນແລະຂໍ້ສະເໜີແນະທາງດ້ານນະໂຍບາຍ ໃຫ້ແກ່ສູນກາງພັກແລະລັດຖະບານຂອງ ສປປລາວ ເພື່ອໄປພິຈາລະນາປັບປຸງການຄຸ້ມຄອງການຂຸດຄົ້ນແຮ່ຫີນ ແລະ ຊາຍ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ມີຄວາມຍືນຍົງຫຼາຍຂຶ້ນຕື່ມ.

ທ່ານ ກອງແກ້ວ ໄຊສົງຄາມ ກ່າວຕື່ມວ່າ: ປັດຈຸບັນ, ການສຶກສາດັ່ງກ່າວແມ່ນໄດ້ສຳເລັດໂດຍພື້ນຖານ ແລະ ຕາມການລາຍງານຂອງຄະນະຮັບຜິດຊອບໂຄງການ, ບົດລາຍງານຜົນການສຶກສານີ້ແມ່ນໄດ້ຜ່ານກອງປະຊຸມປຶກສາຫາລືໃນລະດັບວິຊາການຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນມາແລ້ວຫຼາຍຄັ້ງ; ແຕ່ເຖິງຢ່າງໃດກໍຕາມ, ເພື່ອໃຫ້ບົດລາຍງານຜົນການສຶກສາດັ່ງກ່າວມີປະສິດທິພາບ, ປະສິດທິຜົນ, ສອດຄ່ອງກັບສະພາບການຕົວຈິງຫຼາຍຂຶ້ນ ເພື່ອໄດ້ຮັບການພິຈາລະນານຳໃຊ້ເຂົ້າໃນວຽກງານຕົວຈິງຫຼາຍຂຶ້ນ, ສະຖາບັນວິທະຍາສາດເສດຖະກິດແລະສັງຄົມແຫ່ງຊາດ ຈຶ່ງໄດ້ຈັດສຳມະນາວິທະຍສາດນີ້ຂຶ້ນ ເພື່ອເຜີຍແຜ່ຜົນຂອງການຄົ້ນຄວ້າ, ຮັບຟັງຄຳຄິດຄຳເຫັນ ແລະ ຂໍ້ມູນເພີ່ມຕື່ມ ເພື່ອນຳໄປປັບປຸງບົດລາຍງານຜົນການສຶກສາດັ່ງກ່າວໃຫ້ສົມບູນຂຶ້ນຕື່ມ ເພື່ອເຜີຍແຜ່ຜົນການຄົ້ນຄວ້າໃຫ້ບັນດາການນຳຂອງຂະແໜງການ ແລະ ທ້ອງຖິ່ນກ່ຽວຂ້ອງ ເພື່ອເອົາໄປພິຈາລະນານຳໃຊ້ເຂົ້າໃນວຽກງານຕົວຈິງຕາມຄວາມເໝາະສົມ.

**(ເພຈ: ປະເທດລາວ Pathedlao)**






## ກວດກາ...

(ຕໍ່ຈາກໜ້າ 1)

ການຊ່ວຍໜູນງົບປະມານແຫ່ງລັດທີ່ມີເປົ້າໝາຍສະເພາະ, ນະໂຍບາຍສົ່ງເສີມການເກັບລາຍຮັບງົບປະມານແຫ່ງລັດ, ການຊ່ວຍເຫຼືອລ້າ, ການສັງລວມ ແລະ ລາຍງານ ສະຫຼຸບຂາດຕົວງົບປະມານແຫ່ງລັດ, ການກຳນົດຜົນການກວດກາຂອງອົງການກວດສອບແຫ່ງລັດ ແລະ ເນື້ອໃນອື່ນທີ່ຕິດພັນກັບການຄຸ້ມຄອງງົບປະມານແຫ່ງລັດ ຈຶ່ງມີຄວາມຈຳເປັນຕ້ອງໄດ້ປັບປຸງ; ນອກຈາກນີ້, ກໍເພື່ອໃຫ້ສອດຄ່ອງກັບລັດຖະທຳມະນູນ (ສະບັບປີ 2025), ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ(ສະບັບປີ 2025), ກົດໝາຍວ່າດ້ວຍບັນຊີ (ສະບັບປີ 2023), ການປັບປຸງກົງຈັກການຈັດຕັ້ງຂອງລັດຖະບານ, ການປັບປຸງສາລະບານບັນຊີ-ງົບປະມານແຫ່ງລັດ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ X (2026-2030) ຂອງລັດຖະບານ ແລະ ການຫັນລະບົບການຄຸ້ມຄອງການເງິນໃຫ້ທັນສະໄໝ ແລະ ສອດຄ່ອງກັບຫຼັກການສາກົນ.

ກອງປະຊຸມຄັ້ງນີ້ ໄດ້ຮັບການຄົ້ນຄວ້າຢ່າງລະອຽດ ແລະ ຮອບດ້ານ ຈາກບັນດາຜູ້ເຂົ້າຮ່ວມ ແນໃສ່ເຮັດໃຫ້ເນື້ອໃນຂອງ 2 ຮ່າງກົດໝາຍດັ່ງກ່າວມີຄວາມຄົບຖ້ວນ, ຮັດກຸມ; ຈາກນັ້ນ, ກຳມາທິການກົດໝາຍ ແລະ ຍຸຕິທຳ ຈະໄດ້ສັງລວມ ແລະ ລາຍງານຜົນສຳເລັດຂອງການກວດກາເນື້ອໃນຮອບດ້ານ ຕໍ່ກອງປະຊຸມ ຄປຈສພຊ ກ່ອນນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງ ສພຊ ຊຸດທີ X ທີ່ຈະໄຂຂຶ້ນໃນໄວໆນີ້.

**(ນາງ ກຸກກົກ ບຸດດາໄຊ)**



## ພິທີ...

(ຕໍ່ຈາກໜ້າ 1)

ຮອງປະທານສະພາແຫ່ງຊາດ; ມີບັນດາທ່ານປະທານກຳມາທິການ-ຮອງປະທານກຳມາທິການ ແລະ ສະມາຊິກສະພາແຫ່ງຊາດຜູ້ປະຈຳການ ກສງ, ຕາງໜ້າການນຳຂອງບັນດາກຳມາທິການພາຍໃນສະພາແຫ່ງຊາດ, ຫົວໜ້າກົມ-ຮອງຫົວໜ້າກົມ ແລະ ພະນັກງານ-ລັດຖະກອນ ເຂົ້າຮ່ວມ.

ໃນພິທີ, ໄດ້ຮັບຟັງການສະຫຼຸບລາຍງານວຽກງານໂດຍຫຍໍ້ຂອງກົມທີ່ຂຶ້ນກັບກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ແລະ ກຳມາທິການແຜນການ, ການເງິນ ແລະ ການກວດສອບ (ກຳມາທິການເສດຖະກິດ ແລະ ການເງິນ ໃນປັດຈຸບັນ) ໃນຕະຫຼອດໄລຍະ 5 ປີຜ່ານມາ; ຈາກນັ້ນ, ໄດ້ມີການເຊັນບົດບັນທຶກການມອບ-ຮັບໜ້າທີ່ລະຫວ່າງຫົວໜ້າກົມຜູ້ເກົ່າ ແລະ ຜູ້ໃໝ່.

ທ່ານວິໄລວົງ ບຸດດາຄຳ ໄດ້ມີຄຳເຫັນໂອ້ລົມຕໍ່ພິທີ ໂດຍທ່ານສະແດງຄວາມຍ້ອງຍໍຊົມເຊີຍບັນດາທ່ານຫົວໜ້າກົມຜູ້ເກົ່າ ທີ່ໄດ້ທຸ່ມເທສະຕິປັນຍາ, ຄວາມຮູ້ຄວາມສາມາດ, ຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ຕະຫຼອດໄລຍະຜ່ານມາ ແລະ ເຮັດສຳເລັດໜ້າທີ່ຂອງຕົນເປັນຢ່າງດີ; ສະແດງຄວາມຍິນດີ ແລະ ຊົມເຊີຍບັນດາທ່ານຫົວໜ້າກົມຜູ້ໃໝ່ ທີ່ໄດ້ຮັບຄວາມໄວ້ວາງໃຈຈາກການຈັດຕັ້ງໃຫ້ຮັບຜິດຊອບໜ້າທີ່ໃໝ່ ເພື່ອເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ, ຄະນະນຳຂອງກຳມາທິການເສດຖະກິດ ແລະ ການເງິນ ທັງເນັ້ນໜັກໃຫ້ຖືເອົາການດຳເນີນຊີວິດການເມືອງປະຈຳເດືອນ ເປັນການສ່ອງແສງລາຍງານ, ເປັນເວທີປຶກສາຫາລື, ກວດກາປະເມີນການເຄື່ອນໄຫວໃນແຕ່ລະໄລຍະ; ເອົາໃຈໃສ່ລົງເລິກຄົ້ນຄວ້າ, ວິເຄາະວິໄຈ ບັນຫາໃຫ້ລະອຽດຖີ່ຖ້ວນ ໂດຍຖືເອົາຜົນປະໂຫຍດຂອງປະເທດຊາດແລະຊີວິດການເປັນຢູ່ຂອງປະຊາຊົນເປັນກົກ; ສ້າງເງື່ອນໄຂໃຫ້ພະນັກງານໄດ້ໄປເຝິກອົບຮົມຍົກລະດັບໃນຫົວຂໍ້ຕ່າງໆ ທັງຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ຫຼາຍຂຶ້ນ.





ສຸກສະບາຍຫາຍໂຣຄ

# 5 ເຄັດລັບສຸຂະພາບດີ

**ຮຽບຮຽງໂດຍ: ດອກຫຍ້າ**

ຖ້າເຮົາສາມາດຂໍພອນໄດ້ 3 ຂໍ້ ເຊື່ອເລີຍວ່າ ໜຶ່ງໃນພອນທີ່ຂໍນັ້ນຕ້ອງມີເລື່ອງສຸຂະພາບຢູ່ແນ່ນອນ ເພາະການມີ ສຸຂະພາບດີ ຄືສິ່ງທີ່ທຸກຄົນປາຖະໜາ ແຕ່ວິທີທີ່ງ່າຍກວ່າການຂໍພອນນັ້ນ ແມ່ນຕ້ອງຮູ້ຈັກສ້າງສຸຂະພາບທີ່ດີ ໃຫ້ກັບຕົນເອງ ມື້ນີ້ຜູ້ຂຽນມີມາແນະນຳ ດັ່ງນີ້:



**1. ພັກຜ່ອນໃຫ້ພຽງພໍ:** ເຝິກການນອນໄວແລະຕື່ນເຊົ້າໃຫ້ຢູ່ໃນໄລຍະເວລາ 7-8 ຊົ່ວໂມງຕໍ່ວັນເພື່ອໃຫ້ລະບົບຕ່າງໆໃນຮ່າງກາຍສາມາດເຮັດວຽກໄດ້ຕາມປົກກະຕິ.

**2. ຮັບປະທານອາຫານໃຫ້ຄົບ 5 ໝູ່:** ຮູ້ຈັກເລືອກຮັບປະທານອາຫານທີ່ດີມີປະໂຫຍດໃນປະລິມານທີ່ພຽງພໍ ຕໍ່ມື້ ເພື່ອໃຫ້ສານອາຫານຊ່ວຍຊ້ອມແຊມ ແລະ ເສີມບຳລຸງຮ່າງກາຍໃຫ້ແຂງແຮງຂຶ້ນ.

**3. ດື່ມນໍ້າໃຫ້ຫລາຍ:** ນໍ້າ ແມ່ນສ່ວນປະກອບທີ່ສຳຄັນໃນຮ່າງກາຍ ທັງລະບົບເລືອດ ແລະ ນໍ້າຍ່ອຍ ເພື່ອໃຫ້ສາມາດເຮັດວຽກໄດ້ຢ່າງເປັນປົກກະຕິ ເຊິ່ງຜູ້ຍິງຄວນດື່ມ 8-9 ຈອກຕໍ່ມື້ ແລະ ຜູ້ຊາຍຄວນດື່ມ 12-13 ຈອກຕໍ່ມື້.

**4. ອອກກຳລັງກາຍ:** ການອອກກຳລັງກາຍຈະຊ່ວຍໃຫ້ຮ່າງກາຍສົດຊື່ນແຂງແຮງ ພ້ອມສ້າງພູມຄຸ້ມກັນ ໃຫ້ດີຍິ່ງຂຶ້ນ.

**5. ຮັກສາຄວາມສະອາດ:** ຢ່າລືມເບິ່ງແຍງຄວາມສະອາດທັງຕົວເຮົາ, ເຄື່ອງໃຊ້ຕ່າງໆ ລວມເຖິງ ເຄື່ອງນຸ່ງຫົ່ມໃຫ້ປາສະຈາກສິ່ງເປິເປື້ອນ ແລະ ເຊື້ອໂລກບໍ່ໃຫ້ເຂົ້າໃກ້ໂຕເອງ.

ສຳລັບໃຜທີ່ຢາກມີສຸຂະພາບທີ່ດີຕ້ອງໝັ່ນເບິ່ງແຍງດ້ວຍ 5 ວິທີນີ້ ຮັບຮອງວ່າທ່ານຈະມີສຸຂະພາບດີ ແລະ ແຂງແຮງຍິ່ງຂຶ້ນໄປຕາມລຳດັບຢ່າງແນ່ນອນ.

**ຂໍ້ມູນຈາກ:** **www.omothailand.com**

ວາດກະວີລາວ

# ບຸກໜ້າ ກ້າເຮັດ

**# ອ້ວນ ຄຳມີໄຊ**

❊ ທ່າມກາງຄວາມຍາກຫຍຸ້ງ
ຕ້ອງຊ່ວຍຊູໂຊມດັນ
ສູ້ຊົນປະໂຄມກັນກ້າວ
ບໍ່ແມ່ນຊວນແຕ່ເວົ້າ ເມົາຖະແຫຼງລ່າຍລ້າ
ຄາຊຸ່ນເຄືອງໝອງ
ເລັ່ງແລດຶງຍູ້
ຫຼາຍມືປະກອບສ່ວນ
ຄາສິ້ນສ່ວນກະທຳ ນັ້ນນາ

❊ ບ່ອນໃດຄາຂັດຂ້ອງ
ຕ້ອງຝ້າວພາກັນຄິດ
ແນໃສ່ຫັນຫານເຂົ້າ
ເໝືອນຍາມຍໍຍົກໄມ້ ປາຍກົມແກນໃຫຍ່ຕົ້ນ
ມືວນັ່ງນອນເສີຍ ບໍ່ເປັນຕິ!
ອ່ານໄຂວິທີແກ້
ລະດົມຄົນຂະບວນເຄື່ອນ
ຄົນໜ້ອຍບໍ່ທ່ອນເປັນ ຊັ້ນແລ

❊ ສ້າງຊາດ... ໃຜກໍຈາເອີ່ຍເວົ້າ
ໃຜເດຈິງໃຈທຳ
ຫາກແມ່ນມວນຊົນເຊື້ອ
ຕະລຸມບອນໃຫຍ່ນ້ອຍ ຄອຍໄຂທັງງັດໄງ້
ວອນວ່າວາງໄຂ ຈິງແລ້ວ
ທ່ຽງທົ່ມສະເໝີແທ້
ມະຫາສານສຸມໃສ່
ໃນສິ້ນສ່ວນບໍ່ດີ ຊັ້ນຕວ່າ

❊ ສ່ວນວ່າຊາວໜຸ່ມແໜ້ນ
ຄວນທີ່ເປັນແກນຫຼັກ
ໂຮມແຮງຊູໂຊມອຸ້ມ
ບຸກໃສ່ບົນເບີກບັ້ນ ຂະຫຍັນພຽນຜ່ຳສ້າງ
ກຳລັງໃຫຍ່ມະຫາສານ ເຮົານີ້!
ເປັ່ງແປວໄຟແຈ້ງ
ຄວາມຫວັງສັງຄົມໃໝ່
ທາງຮູ້ຮ່ອມເດີນ ເທາະນາ

❊ ໝາຍໝັ້ນຮຽນຮ່ຳຮູ້
ສິ່ງໃດດີລະດົມເຮັດ
ພົບບ່ອນເປົ້າບາງຂ້ອງ
ບາກບັ່ນບືນບໍ່ຢ້ານ ອາດຫານຕີຕ່ອຍຕ້ານ
ຊູໃສ່ວິຊາການ ຍຸກນີ້
ຮ່ວມແຮງໂຮມເຮົ້າ
ຄຸງເຄືອງຄາຍາກ
ຂານເຂົ້າເຄື່ອນຂະບວນ ແທ້ເນີ!



ສັກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄັ່ງພິທີການ)*

**# ສຽມທ້ຽນ**

❊ ວັນແພດລາວ **ຄົບຮອບ 61 ປີ** (18/6/1965-18/6/2026) ຮຽນຂໍອາໄສເວທີນີ້ ຝາກສົ່ງພອນໄຊ ຂໍໃຫ້ມີຄວາມສຸກ ເຂັ້ມແຂງທັນທ້າວ ບັກຮົບຊຸດຂາວບ້າໃຈກ້ວາງ ທານທະເລມິຫຽມເທົ່າປະຊາລາວຫວັງເພິ່ງຊົ້ນ ແພດທຸກຄົນ ຈົ່ງໄດ້ ສຸກຂີລາບລື້ນ ຍືນໝັ້ນຂໍ່ວບີລັບ **ທ່ານເອີຍ!**

❊ ໄລຍະນີ້ເຂົ້າສູ່ຊ່ວງລະດູຝົນເຕັມຮູບແບບ ຂໍໃຫ້ມີສະຕິຕັ້ງ ຫຍັບຍ່າງຄອບລະວັງ ອາດມີຝົນທັງລົມ ທົ່ງມາເພມ້າງ ຄວາມເສຍຫາຍເກີດໄດ້ ກັບເຮືອນຊານສະຖານທີ່ ຂໍໃຫ້ພົງພີ່ນ້ອງ ກຽມຄວາມພ້ອມຮັບມື **ທ່ານເອີຍ!**

## ຊວນຍິ້ມ

**# ພົ້ງລຶ້ງ**

### ເລື່ອງ: ຜິດທີ່ກູ

ສົມສີ ກຳລັງຄະມຸກຄະມຸບເກັບເຄື່ອງຂອງໃສ່ກະເປົາ, ບັງເອີນລູກຊາຍມາເຫັນ ຈຶ່ງຖາມໄປວ່າ:

**ລູກຊາຍ:** ພໍ່, ເຈົ້າຊິເກັບເຄື່ອງໄປໃສ?

**ສົມສີ:** ພໍ່ຈະໄປສ່ານມະບາຢູ່ສິງກະໂປ, ລົບກວນລູກຊ່ວຍພໍ່ເອີ້ນລົດໃຫ້ແດ່

**ລູກຊາຍ:** ໄດ້ພໍ່, ດຽວຂ້ອຍຊິເອີ້ນໃຫ້

ຜ່ານໄປດົນເຕີບ, ເຫັນລູກຊາຍຍ່າງຄໍ່ຕົກມາ, ສົມສີ ຈຶ່ງຖາມວ່າ:

**ສົມສີ:** ວ່າວ... ຄືຍ່າງເຮັດຄໍ່ຕົກມາ, ລົດເດຊັ້ນບາ ບໍ່ມີຫວາ?

**ລູກຊາຍ:** ລົດກັ້ນມີຫຼາຍພໍ່ ແຕ່ຄັນທີ່ຊິໄປສິງກະໂປບໍ່ມີເລີຍຈັກຄັນ, ລູກລອງເອີ້ນຫຼາຍຄັນແລ້ວຄັນສຸດທ້າຍແຮ່ງດ່າລູກວ່າວ່າບໍ່ມີແນວເຮັດຫວາ ມາຫາເອີ້ນລົດແນວນີ້

ສົມສີ ຄິດໃນໃຈ "ເອີ້... ຜິດທີ່ກູເອງແຫຼະ ທີ່ບໍ່ບອກມັນຈັກແນ່ ວ່າກູຊິໄປສະໜາມບິນ"

## ສຸພາສິດ-ຄະຕິເຕືອນໃຈ

**#ດອກຫຍ້າ**

"ມີຄວາມຮູ້ນັ້ນຍັງບໍ່ພໍ ຕ້ອງຮູ້ຈັກນຳອອກມາໃຊ້ ແລະ ມີຄວາມຕັ້ງໃຈພຽງຢ່າງດຽວຍັງບໍ່ພໍ ເຮົາຕ້ອງຮູ້ຈັກລົງມືເຮັດ"

ລັດຖະສະພາຕ່າງປະເທດ

# Sweden ຍົກເລີກແຜນຫຼຸດອາຍຸຜູ້ຮັບໂທດທາງອາຍາລົງເຫຼືອ 13 ປີ ຫຼັງຈາກສຽງສະໜັບສະໜູນບໍ່ພໍ



(REUTERS) - ລັດຖະບານຝ່າຍກາງ-ຂວາຂອງສະວີເດັນ ຫຼື ຊູແອດ ໄດ້ປະກາດເມື່ອວັນທີ 11 ມິຖຸນານີ້ວ່າ ຈະຍົກເລີກແຜນການທີ່ມີການໂຕ້ຖຽງກັນໃນການຫຼຸດອາຍຸຄວາມຮັບຜິດຊອບທາງອາຍາຈາກ 15 ປີ ລົງເຫຼືອ 13 ປີ.

ກຸນນາຣ໌ ສະຕຣອມເມີ (Gunnar Strommer) ລັດຖະມົນຕີກະຊວງຍຸຕິທຳ ກ່າວວ່າ ມາດຕະການດັ່ງກ່າວ ບໍ່ໄດ້ຮັບການສະໜັບສະໜູນພຽງພໍໃນລັດຖະສະພາ ແລະ ລັດຖະບານຈະສະເໜີກົດໝາຍໃໝ່ແທນ, ໂດຍກຳນົດອາຍຸຄວາມຮັບຜິດຊອບທາງອາຍາ ໄວ້ທີ່ 14 ປີ.

ສະວີເດັນ ປະເຊີນກັບບັນຫາອາຊະຍາກຳຂອງກຸ່ມແກ໊ງເພີ່ມຂຶ້ນຢ່າງຫຼວງຫຼາຍໃນໄລຍະ 20 ປີທີ່ຜ່ານມາ, ໂດຍມີຈຳນວນເຫດການຍິງກັນສູງທີ່ສຸດໃນເອີຣົບໃນປັດຈຸບັນ.

ລັດຖະບານໄດ້ປັບປຸງລະບົບຍຸຕິທຳທາງອາຍາຄືນໃໝ່, ໂດຍໃຫ້ອຳນາດຕຳຫຼວດຫຼາຍຂຶ້ນ ແລະ ກຳນົດການລົງໂທດທີ່ເຂັ້ມງວດກວ່າເກົ່າ, ແຕ່ກໍຍັງບໍ່ສາມາດຢຸດຢັ້ງການເກນເດັກອາຍຸນ້ອຍລົງເລື້ອຍໆ ມາກໍ່ອາຊະຍາກຳຮຸນແຮງ.

ສະຕຣອມເມີ ກ່າວວ່າ ປີຜ່ານມາ, ມີເດັກອາຍຸຕໍ່າກວ່າ 15 ປີ ຫຼາຍກວ່າ 50 ຄົນ ຖືກນຳຕົວຂຶ້ນສານໃນຂໍ້ຫາສົງໄສວ່າຄາດຕະກຳ ຫຼື ພະຍາຍາມຄາດຕະກຳ.

ຈົນເຖິງຕອນນີ້, ເດັກທີ່ກໍ່ອາຊະຍາກຳຮຸນແຮງ ຈະຖືກສົ່ງໄປຢູ່ໃນສະຖານສົງເຄາະເຍົາວະຊົນ ເຊິ່ງຖືກເຫັນວ່າເປັນລະບົບທີ່ "ລົ້ມເຫຼວ", ຂະນະທີ່ລັດຖະບານວາງແຜນທີ່ຈະກັກຂັງເດັກອາຍຸ 13 ປີ ໄວ້ໃນຄຸກພິເສດ.

ຄະນະກຳມະການສິດທິເດັກແຫ່ງສະຫະປະຊາຊາດແນະນຳວ່າ ອາຍຸຕໍ່າສຸດຂອງຄວາມຮັບຜິດຊອບທາງອາຍາຄວນຈະມີຢ່າງໜ້ອຍ 14 ປີ, ເຊິ່ງເປັນອາຍຸສະເລ່ຍທົ່ວສະຫະພາບເອີຣົບ.

# Latvia ບັງຄັບໃຊ້ກົດໝາຍການເຂົ້າເມືອງທີ່ເຂັ້ມງວດຂຶ້ນ



(Xinhua) - ວັນທີ 11 ມິຖຸນານີ້, ລັດຖະສະພາລັດເວຍໄດ້ຜ່ານກົດໝາຍການເຂົ້າເມືອງສະບັບໃໝ່ ເຊິ່ງເພີ່ມມາດຕະການຄວບຄຸມການເຂົ້າເມືອງທີ່ເຂັ້ມງວດຫຼາຍຂຶ້ນ ແລະ ແກ້ໄຂລະບຽບການກ່ຽວກັບການເຂົ້າເມືອງ ແລະ ການຢູ່ອາໄສຂອງພົນລະເມືອງຈາກປະເທດທີສາມ (ປະເທດນອກສະຫະພາບເອີຣົບ ຫຼື ອີຢູ); ກົດໝາຍສະບັບນີ້ ຍັງເປີດທາງໃຫ້ຄົນຕ່າງປະເທດໄດ້ຮັບໃບອະນຸຍາດພັກອາໄສຊົ່ວຄາວເປັນເວລາສູງສຸດ 5 ປີ ເພື່ອແລກປ່ຽນກັບການລົງທຶນ.

ກົດໝາຍສະບັບໃໝ່ນີ້ ມີຈຸດປະສົງເພື່ອສ້າງລະບົບການເຂົ້າເມືອງທີ່ຊັດເຈນ ແລະ ໂປ່ງໃສຍິ່ງຂຶ້ນ ພ້ອມທັງຫຼຸດຄວາມສ່ຽງຂອງການເຂົ້າເມືອງຜິດກົດໝາຍ.

ໜຶ່ງໃນການປ່ຽນແປງທີ່ສຳຄັນແມ່ນ, ກົດໝາຍດັ່ງກ່າວ ເພີ່ມທະວີການກວດສອບພົນລະເມືອງປະເທດທີສາມຢູ່ຊາຍແດນພາຍນອກ ແລະ ນຳຂັ້ນຕອນການສົ່ງກັບຊາຍແດນແບບໃໝ່ມາໃຊ້; ນອກຈາກນີ້, ຍັງຂະຫຍາຍການໃຊ້ຂໍ້ມູນຊີວະມິຕິ (biometric) ແລະ ການແບ່ງປັນຂໍ້ມູນກັບຖານຂໍ້ມູນຂອງອີຢູເພື່ອປັບປຸງການຢັ້ງຢືນຕົວຕົນ ແລະ ການກວດສອບຄວາມປອດໄພ.

ຂະນະດຽວກັນ, ການກວດສອບກ່ອນເຂົ້າເມືອງກໍຈະເຂັ້ມງວດຂຶ້ນ ໂດຍກຳນົດໃຫ້ຜູ້ສະໝັກຕ້ອງໃຫ້ຂໍ້ມູນຢ່າງລະອຽດເພີ່ມຕື່ມກ່ຽວກັບຈຸດປະສົງຂອງການຢ້ຽມຢາມ ແລະ ແຜນການພັກເຊົາ; ນອກຈາກນີ້, ຍັງກຳນົດຂໍ້ຈຳກັດກ່ຽວກັບການຈ້າງງານພົນລະເມືອງປະເທດທີສາມໃນອາຊີບທີ່ມີທັກສະຕໍ່າ, ເພີ່ມການລົງໂທດສຳລັບການລະເມີດ ແລະ ເສີມສ້າງການກວດກາໃນຂະແໜງການສຶກສາ.

ບັນດາບົດບັນຍັດຕົ້ນຕໍຂອງກົດໝາຍໃໝ່ ຈະມີຜົນບັງຄັບໃຊ້ໃນວັນທີ 1 ມັງກອນ 2027.

# Canada ສະເໜີກົດໝາຍຫ້າມເດັກອາຍຸຕໍ່າກວ່າ 16 ປີໃຊ້ສື່ສັງຄົມ, ການຄວບຄຸມ AI Chatbots




(Reuters) - ວັນທີ 10 ມິຖຸນານີ້, ລັດຖະບານການາດາ ສະເໜີຮ່າງກົດໝາຍຄວາມປອດໄພທາງດິຈິຕອນ ເຊິ່ງຈະຫ້າມການໃຊ້ສື່ສັງຄົມອອນລາຍສຳລັບເດັກອາຍຸຕໍ່າກວ່າ 16 ປີ, ຍົກເວັ້ນເວທີ (ແພລດຟອມ - platform) ທີ່ປະຕິບັດຕາມມາດຕະຖານຄວາມປອດໄພບາງຢ່າງ; ຕາມຫຼັງອົດສະຕຣາລີ ທີ່ອອກກົດໝາຍຫ້າມເຍົາວະຊົນໃຊ້ສື່ສັງຄົມອອນລາຍເປັນຄັ້ງທຳອິດຂອງໂລກເມື່ອຫຼາຍເດືອນກ່ອນ.

ເຈົ້າໜ້າທີ່ລັດຖະບານການາດາກ່າວວ່າ ຮ່າງກົດໝາຍສະບັບໃໝ່ ມີຈຸດປະສົງທີ່ຈະເຮັດໃຫ້ແຊດບອດປັນຍາປະດິດ (AIchatbots) ປອດໄພຍິ່ງຂຶ້ນດ້ວຍການສ້າງຕັ້ງອົງການຄວບຄຸມດ້ານດິຈິຕອນ ເພື່ອກຳນົດມາດຕະຖານຄວາມປອດໄພ ເຊິ່ງບໍລິສັດທີ່ບໍ່ປະຕິບັດຕາມອາດຈະປະເຊີນກັບການປັບໃໝ 3% ຂອງລາຍຮັບທົ່ວໂລກຂອງພວກເຂົາ ຫຼື ສູງສຸດ 10 ລ້ານໂດລາການາດາ (ປະມານ 7.2 ລ້ານໂດລາສະຫະລັດ), ຂຶ້ນກັບຈຳນວນໃດຫຼາຍກວ່າ ສຳລັບການບໍ່ປະຕິບັດຕາມ.

ມາກ ມິວເລີ (Marc Miller) ລັດຖະມົນຕີກະຊວງເອກະລັກ ແລະ ວັດທະນະທຳ ກ່າວວ່າ ແພລດຟອມສື່ສັງຄົມອອນລາຍ ແລະ AI chatbots ຖືກອອກແບບມາເພື່ອດຶງດູດຄວາມສົນໃຈ ເຊິ່ງບໍ່ໄດ້ສະໜັບສະໜູນພັດທະນາການທີ່ດີຂອງເດັກ ແລະ ກາຍເປັນແຫຼ່ງທີ່ມາຂອງຄວາມກັງວົນ, ຄວາມໂດດດ່ຽວ, ພາວະຊຶມເສົ້າ ແລະ ບັນຫາສຸຂະພາບຈິດອື່ນໆ ສຳລັບເຍົາວະຊົນຊາວການາດາຈຳນວນຫຼາຍ. ມິວເລີ ກ່າວຕື່ມວ່າ "ກົດໝາຍສະບັບນີ້ ຈະສ້າງສະພາບແວດລ້ອມທີ່ປອດໄພຍິ່ງຂຶ້ນສຳລັບເຍົາວະຊົນຊາວການາດາ ແລະ ສົ່ງເສີມໃຫ້ພວກເຂົາສາມາດພົບປະກັນດ້ວຍຕົວເອງ, ສ້າງມິດຕະພາບ, ຕັ້ງໃຈຮຽນ ແລະ ຮຽນຮູ້ທັກສະໃນໂລກແຫ່ງຄວາມເປັນຈິງ ເພື່ອໃຫ້ພວກເຂົາສາມາດເຕີບໃຫຍ່ໄດ້ຢ່າງເຕັມທີ່".

ການນຳສະເໜີຮ່າງກົດໝາຍຕໍ່ລັດຖະສະພາ ເກີດຂຶ້ນພຽງບໍ່ເທົ່າໃດອາທິດຫຼັງຈາກຫຼາຍຄອບຄົວທີ່ໄດ້ຮັບຜົນກະທົບຈາກການຍິງສັງຫານໝູ່ທີ່ຮ້າຍແຮງທີ່ສຸດຂອງປະເທດ ຍື່ນຟ້ອງບໍລິສັດ OpenAI ໂດຍກ່າວຫາວ່າ OpenAI ຮູ້ວ່າຄາດຕະກອນກຳລັງວາງແຜນການໂຈມຕີເທິງແຊດບອດ "ChatGPT" ແຕ່ບໍ່ແຈ້ງເຕືອນຕຳຫຼວດ.

ຢ່າງໃດກໍຕາມ, ເຈົ້າໜ້າທີ່ລັດຖະບານກ່າວໃນການບັນລະຍາຍສະຫຼຸບທາງວິຊາການວ່າ ລັດຖະບານ ອາດຕ້ອງໃຊ້ເວລາໜຶ່ງປີເພື່ອຜ່ານຮ່າງກົດໝາຍ ແລະ ຫຼັງຈາກນັ້ນອີກ 18 ເດືອນ ເພື່ອສ້າງຕັ້ງອົງການຄວບຄຸມດ້ານດິຈິຕອນ.

# Greece ອະນຸມັດກົດໝາຍເພື່ອເລັ່ງການເນລະເທດຜູ້ອົບພະຍົບ, ມີຈຸດປະສົງເພື່ອສ້າງຕັ້ງສູນສົ່ງຕົວກັບ




(REUTERS) - ວັນທີ 9 ມິຖຸນານີ້, ລັດຖະສະພາເກຣັກ ອະນຸມັດກົດໝາຍເພື່ອເລັ່ງຂະບວນການເນລະເທດຜູ້ຂໍລີ້ໄພທີ່ຖືກປະຕິເສດ ແລະ ອະນຸຍາດໃຫ້ສົ່ງພວກເຂົາໄປຍັງ "ສູນກາງການສົ່ງຕົວກັບ" (return hubs) ນອກສະຫະພາບເອີຣົບ (EU) ເມື່ອມີການບັນລຸຂໍ້ຕົກລົງສອງຝ່າຍກັບປະເທດທີສາມ.

ເກຣັກ - ປະເທດທາງພາກໃຕ້ສຸດຂອງເອີຣົບໃນທະເລເມດິເຕີເຣນຽນ ແລະ ເປັນຈຸດເດີນທາງເຂົ້າຕົ້ນຕໍສຳລັບຜູ້ອົບພະຍົບ - ເປັນແນວໜ້າຂອງວິກິດການໃນປີ 2015-2016 ເມື່ອມີຜູ້ຄົນຫຼາຍກວ່າໜຶ່ງລ້ານຄົນຈາກຕາເວັນອອກກາງ ແລະ ອາຟຣິກາ ຂ້າມຊາຍແດນເຂົ້າໄປໃນເອີຣົບ; ເຖິງແມ່ນຈຳນວນຜູ້ອົບພະຍົບທີ່ເດີນທາງມາເຖິງໄດ້ຫຼຸດລົງນັບຕັ້ງແຕ່ນັ້ນມາ, ແຕ່ 2 ເກາະໃນທະເລອີຈຽນ (Aegean) ເຊິ່ງຕັ້ງຢູ່ໃກ້ກັບຝັ່ງທະເລທະວີບອາຟຣິກາຫຼາຍທີ່ສຸດ ໄດ້ແກ່ເກາະຄຣີດ (Crete) ແລະເກາະກາຟດອສ (Gavdos) ພັດພົບວ່າຈຳນວນເຮືອຂອງຜູ້ອົບພະຍົບ ທີ່ສ່ວນໃຫຍ່ມາຈາກປະເທດລີບີເດີນທາງມາເຖິງຝັ່ງທະເລເພີ່ມຂຶ້ນຢ່າງຫຼວງຫຼາຍໃນໄລຍະສອງສາມປີທີ່ຜ່ານມາ.

ອາທິດທຳອິດຂອງເດືອນນີ້, ສະມາຊິກສະພານິຕິບັນຍັດ ແລະ ລັດຖະບານຂອງ EU ໄດ້ເຫັນດີກ່ຽວກັບກົດລະບຽບໃໝ່ທີ່ອະນຸຍາດໃຫ້ປະເທດຕ່າງໆສົ່ງຜູ້ອົບພະຍົບທີ່ຖືກສັ່ງໃຫ້ອອກຈາກກຸ່ມປະເທດສະມາຊິກ ໄປຍັງສູນກັກກັນໃນປະເທດທີສາມ, ເຖິງແມ່ນການເຄື່ອນໄຫວນີ້ຖືກວິພາກວິຈານຢ່າງໜັກວ່າອາດຈະນຳໄປສູ່ການລະເມີດສິດທິມະນຸດ.

ເກຣັກ ກຳລັງເຮັດວຽກຮ່ວມກັບໂຮນລັງ, ດານມາກ, ເຢຍລະມັນ ແລະ ໂອຕຣິດ ເພື່ອສ້າງຕັ້ງສູນກາງການສົ່ງຕົວກັບ ແລະ ການຂົນສົ່ງຮ່ວມກັນ; ຂະນະທີ່ການເຈລະຈາສອງຝ່າຍກັບອູການດາ ກ່ຽວກັບຂໍ້ຕົກລົງທີ່ຄ້າຍຄືກັນ ຖືກໂຈະໄວ້ຊົ່ວຄາວ.

ທານອສ ເພລຟຣິສ (Thanos Plevris) ລັດຖະມົນຕີກະຊວງການຍ້າຍຖິ່ນຖານຂອງເກຣັກ ກ່າວວ່າ: ປະເທດສະມາຊິກ EU ໄດ້ເຈລະຈາກັບປະເທດທີສາມ ເພື່ອພະຍາຍາມບັນລຸຂໍ້ຕົກລົງສະບັບທຳອິດໃນປີນີ້ ແລະ ຄາດວ່າສູນກາງການສົ່ງຕົວກັບຈະເປີດໃນປີ 2027.

# ຍີ່ປຸ່ນ ຜ່ານຮ່າງກົດໝາຍອຳນວຍຄວາມສະດວກ ໃຫ້ພະນັກງານລັດ ປະຕິບັດໜ້າທີ່ຄວບຄູ່ກັນ



(Xinhua) - ວັນພຸດ ທີ 10 ມິຖຸນານີ້, ສະພາສູງຍີ່ປຸ່ນ ໄດ້ຜ່ານຮ່າງກົດໝາຍເພື່ອອຳນວຍຄວາມສະດວກໃຫ້ແກ່ພະນັກງານລັດທັງລະດັບຊາດ ແລະ ລະດັບທ້ອງຖິ່ນ ປະຕິບັດໜ້າທີ່ຄວບຄູ່ກັນໃນຖານະກຳລັງສຳຮອງຂອງກອງກຳລັງປ້ອງກັນຕົນເອງ (Self-Defense Forces - SDF), ເຊິ່ງຊ່ວຍຫຼຸດອຸປະສັກຕໍ່ການລະດົມພົນໃນສະຖານະການສຸກເສີນ, ຕາມການລາຍງານຂອງສຳນັກຂ່າວກຽວໂດ (Kyodo News).

ອີງຕາມກົດໝາຍວ່າດ້ວຍຂໍ້ກຳນົດພິເສດສຳລັບການຈ້າງງານຄວບຄູ່ກັນຂອງພະນັກງານລັດລະດັບຊາດ ແລະ ລະດັບທ້ອງຖິ່ນ ເພື່ອຮັບປະກັນການປະຕິບັດໜ້າທີ່ຂອງກຳລັງສຳຮອງ SDF ແລະບຸກຄົນອື່ນໆໄດ້ດຳເນີນໄປຢ່າງສະດວກ, ພະນັກງານລັດລະດັບຊາດ ແລະ ລະດັບທ້ອງຖິ່ນ ທີ່ຖືກຮຽກຕົວເຂົ້າຮັບການເຝິກອົບຮົມເປັນກຳລັງສຳຮອງຂອງກອງກຳລັງປ້ອງກັນຕົນເອງຈະຍັງໄດ້ຮັບເງິນເດືອນເຕັມຈາກວຽກປົກກະຕິຂອງຕົນໃນໄລຍະເວລາທີ່ຕອບຮັບການຮຽກຕົວ; ນອກຈາກນີ້,ເມື່ອພະນັກງານລັດໄດ້ຮັບການອະນຸມັດຈາກຜູ້ບັງຄັບບັນຊາເມື່ອເຂົ້າຮ່ວມກອງກຳລັງສຳຮອງ, ພວກເຂົາຈະບໍ່ຈຳເປັນຕ້ອງຂໍການອະນຸມັດໃນແຕ່ລະຄັ້ງທີ່ເຂົ້າຮ່ວມການເຝິກອົບຮົມ ຫຼື ປະຕິບັດໜ້າທີ່ທີ່ກ່ຽວຂ້ອງ ໃນອະນາຄົດອີກຕໍ່ໄປ.

ບຸກຄະລາກອນສຳຮອງຂອງກອງກຳລັງປ້ອງກັນຕົນເອງ ໂດຍປົກກະຕິຈະເຮັດວຽກໃນອາຊີບພົນລະເຮືອນຂອງຕົນ ແລະ ຕ້ອງເຂົ້າຮັບການເຝິກອົບຮົມຈຳນວນວັນຕາມທີ່ກຳນົດໃນແຕ່ລະປີ; ປັດຈຸບັນ,ຕຳແໜ່ງບຸກຄະລາກອນສຳຮອງຂອງ SDF ປະມານ 70% ເຕັມແລ້ວ.

ຍີ່ປຸ່ນພະຍາຍາມເສີມສ້າງສິ່ງທີ່ເອີ້ນວ່າ"ຂີດຄວາມສາມາດດ້ານການປ້ອງກັນປະເທດ" ຜ່ານການອອກ ແລະ ປັບປຸງກົດໝາຍ ໃນໄລຍະຫຼາຍເດືອນທີ່ຜ່ານມາ.

ເມື່ອວັນທີ 9 ມິຖຸນາ, ພັກເສລີປະຊາທິປະໄຕ ເຊິ່ງເປັນພັກລັດຖະບານ ໄດ້ອະນຸມັດຮ່າງຂໍ້ສະເໜີກ່ຽວກັບການປັບປຸງເອກະສານຄວາມໝັ້ນຄົງແຫ່ງຊາດທີ່ສຳຄັນ 3 ສະບັບຂອງປະເທດພາຍໃນປີນີ້. ຂໍ້ສະເໜີດັ່ງກ່າວ ບໍ່ພຽງແຕ່ຮຽກຮ້ອງໃຫ້ເພີ່ມງົບປະມານດ້ານການປ້ອງກັນປະເທດເທົ່ານັ້ນ, ແຕ່ຍັງຮຽກຮ້ອງໃຫ້ເພີ່ມອັດຕາກຳລັງພົນສຳຮອງຂອງSDFເພື່ອກຽມພ້ອມສຳລັບເຫດການສຸກເສີນ; ການພັດທະນາເຫຼົ່ານີ້ໄດ້ກໍ່ໃຫ້ເກີດຄວາມກັງວົນຂອງປະຊາຊົນຢ່າງກວ້າງຂວາງ.




#ບ່າວກະບື

**ເມຍ:** "ອ້າຍເຊື່ອບໍ່ວ່າ ຈັບພວກຂີ້ລັກມັກຈົກທັງຫຼາຍນັ້ນ, ບໍ່ໄວກໍ່ຊ້າ ພວກເຂົາຕ້ອງກິນແໜງແຄງໃຈ"

**ຜົວ:** "ແນ່ນອນລະທີ່ຮັກ, ນ້ອງຮູ້ບໍ່ລະວ່າ ຍ້ອນຫຼັງຈາກດຽວນີ້ຫຼາຍປີ, ອ້າຍໄດ້ຂະໂມຍຫົວໃຈຂອງນ້ອງ ແລະ ດຽວນີ້ອ້າຍຈຶ່ງຕ້ອງກິນແໜງແຄງໃຈ"

#BAOKBU

WIFE: "Do you accept the fact that thieves are made to repent sooner or later?"

HUSBAND: "Of course dear, Dpm't upi lmpw tjat ,amu uears from now, I had stolen your heart and am repenting now"




## ປະກອບ...

(ຕໍ່ຈາກໜ້າ 1)

ປະທານຂອງທ່ານ ແກ້ວວິສຸກ ໂສລະພົມ ຮອງລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ (ກຕສ), ມີບັນດາທ່ານສະມາຊິກສະພາແຫ່ງຊາດແລະສະພາປະຊາຊົນແຂວງ,ຄະນະນຳພະແນກເຕັກໂນໂລຊີ ແລະ ການສື່ສານ ພ້ອມດ້ວຍຜູ້ຕາງໜ້າສານປະຊາຊົນ, ອົງການໄອຍະການປະຊາຊົນ, ພະແນກການອ້ອມຂ້າງແຂວງ ຈາກ 7 ແຂວງພາກກາງ-ພາກໃຕ້ ຄື: ບໍລິຄຳໄຊ,ຄຳມ່ວນ,ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງ ແລະ ອັດຕະປື ຕະຫຼອດເຖິງຄະນະຮັບຜິດຊອບປັບປຸງກົດໝາຍດັ່ງກ່າວເຂົ້າຮ່ວມຢ່າງພ້ອມພຽງ.

ໃນການກ່າວເປີດກອງປະຊຸມ, ທ່ານ ແກ້ວວິສຸກ ໂສລະພົມ ມີຄຳເຫັນວ່າ: ຈຸດປະສົງຕົ້ນຕໍຂອງການປັບປຸງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ (ຫຼື ອາຊະຍາກຳທາງໄຊເບີ) ແມ່ນເພື່ອສ້າງ ແລະ ປັບປຸງຂອບເຂດນິຕິກຳໃຫ້ມີຄວາມຮັດກຸມ ແລະ ທັນການ, ປົກປ້ອງຄວາມໝັ້ນຄົງທາງໄຊເບີ ແລະ ຄວາມສະຫງົບຂອງສັງຄົມ, ຍົກລະດັບການຮ່ວມມື ແລະເຊື່ອມໂຍງກັບສາກົນ.ກົດໝາຍສະບັບນີ້ ບໍ່ພຽງຈະເປັນເຄື່ອງມືໃນການຄຸ້ມຄອງຂອງລັດຖະບານເທົ່ານັ້ນ, ແຕ່ແມ່ນໝາກຫົວໃຈ ແລະ ເປັນບ່ອນອີງອັນໜັກແໜ້ນທີ່ມີຄວາມສຳຄັນທີ່ສຸດໃນການປົກປ້ອງປະຊາຊົນ ແລະ ສັງຄົມລາວ ໃຫ້ມີຄວາມປອດໄພໃນໂລກດິຈິຕອນ; ພ້ອມກັນນັ້ນ, ຍັງເປັນກົນໄກຍຸດທະສາດໃນການສ້າງຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ, ເພື່ອຂັບເຄື່ອນການພັດທະນາເສດຖະກິດດິຈິຕອນຢູ່ ສປປ ລາວ ໃຫ້ມີຄວາມເຕີບໃຫຍ່ຂະຫຍາຍຕົວຢ່າງໝັ້ນຄົງ ແລະ ຍືນຍົງ.



ຈາກນັ້ນ, ທ່ານ ສຸເນດ ໂຕ ຊາພັກດີ ຮອງຫົວໜ້າກົມຄວາມປອດໄພໄຊເບີ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ທັງເປັນຫົວໜ້າຄະນະຄົ້ນຄວ້າເນື້ອໃນ ໄດ້ຂຶ້ນຜ່ານບົດລາຍງານກ່ຽວກັບສະພາບການຄົ້ນຄວ້າ ແລະ ຮ່າງກົດໝາຍວ່າດ້ວຍການຕ້ານແລະສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ພ້ອມທັງນຳສະເໜີຮ່າງກົດໝາຍສະບັບປັບປຸງດັ່ງກ່າວ; ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຍະຍາກຳທາງລະບົບຄອມພິວເຕີສະບັບປີ2015 ທີ່ນຳໃຊ້ໃນປັດຈຸບັນ ເຫັນວ່າມີເນື້ອໃນບາງສ່ວນທີ່ບໍ່ທັນສອດຄ່ອງກັບສະພາບໄພຂົ່ມຂູ່ ຫຼື ໄພຄຸກຄາມ ຫຼື ຮູບແບບການໂຈມຕີທາງໄຊເບີ ແລະ ມາດຕະການສາກົນທີ່ປ່ຽນແປງໄປ. ດັ່ງນັ້ນ, ລັດຖະບານ ຈຶ່ງໄດ້ມອບໝາຍໃຫ້ຂະແໜງການກ່ຽວຂ້ອງ ກໍຄື ກຕສ ແລະ ທາງກະຊວງກໍໄດ້ອອກຂໍ້ຕົກລົງເລກທີ 2693/ກຕສ, ລົງວັນທີ 19/8/2025ວ່າດ້ວຍການແຕ່ງຕັ້ງຄະນະປັບປຸງ ເຊິ່ງປະກອບມີຕາງໜ້າສະພາແຫ່ງຊາດ, ກະຊວງ ປກຊ-ປກສ, ກະຊວງຍຸຕິທຳ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ກຕສ; ຄະນະດັ່ງກ່າວ ໄດ້ຄົ້ນຄວ້າ ແລະ ປະຊຸມ 9 ຄັ້ງ ເຊິ່ງໄດ້ຄົ້ນຄວ້າເພີ່ມ ແລະ ຕັດ ພາກ, ໝວດ, ມາດຕາ, ເນື້ອໃນບາງຈຸດອອກ ໂດຍອີງໃສ່ບັນດາກົດໝາຍຂອງປະເທດຫວຽດນາມ, ຈີນ, ໄທ, ສົນທິສັນຍາບູດາເປສ (Budapest Convention), ສົນທິສັນຍາສະຫະປະຊາຊາດວ່າດ້ວຍການຕ້ານອາຊະຍາກຳທາງໄຊເບີ ແລະ ສະພາບຕົວຈິງການຂະຫຍາຍຕົວຂອງເຕັກໂນໂລຊີໃນ ສປປລາວ; ນອກນີ້, ກໍຍັງໄດ້ຈັດກອງປະຊຸມທາບທາມຄຳຄິດຄຳເຫັນຈາກບັນດາກົມທຽບເທົ່າພາຍໃນ ກຕສ 1 ຄັ້ງ ແລະ ຈັດກອງປະຊຸມເປີດກວ້າງທາບທາມຂັ້ນສູນກາງ 1 ຄັ້ງ ຈຶ່ງໄດ້ໂຄງຮ່າງກົດໝາຍສະບັບປັບປຸງ ເຊິ່ງປະກອບມີ 9 ພາກ, 5 ໝວດ, 68 ມາດຕາ.

ຜູ້ເຂົ້າຮ່ວມໄດ້ພ້ອມກັນປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ, ພາວະວິໄສ ຕໍ່ຮ່າງກົດໝາຍວ່າດ້ວຍການຕ້ານແລະສະກັດກັ້ນອາຍະຍາກຳທາງລະບົບຄອມພິວເຕີເພື່ອສ້າງຄວາມເປັນເອກະພາບ ແລະ ເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍສະບັບດັ່ງກ່າວ ຄົບຖ້ວນ, ສົມບູນ, ຮັດກຸມ ແລະ ຖືກຕ້ອງສອດຄ່ອງກັບສະພາບການຕົວຈິງໃນຍຸກປັດຈຸບັນ.

**(ເພຈ: ຄວາມສະຫງົບ Lao Security News)**

**ຄະນະບັນນາທິການ**

ທ່ານ ບໍ ຫານປະເສີດ ຫົວໜ້າ ບກ
ທ່ານ ເອລາວັນ ພັນທະລາວົງ ຮອງຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**

ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**

ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**

ທ່ານ ສອນສັກ ວັນວິໄຊ